ກະຊວງແຜນການ ແລະ ການລົງທຶນ
ສູນສະຖິຕິແຫ່ງຊາດ
Lao Statistics Bureau

# ບົດລາຍງານ
# ສະຖິຕິການຄ້າລະຫວ່າງປະເທດດ້ານສິນຄ້າ
# ຂອງ ສປປ ລາວ





ນະຄອນຫຼວງວຽງຈັນ 2023

# ຄະນະຮັບຜິດຊອບຂຽນບົດລາຍງານ

## ຊີ້ນໍາໂດຍ:

ທ່ານ ນາງ ພອນສະຫລີ ສຸກສະຫວັດ, ຫົວໜ້າສູນສະຖິຕິແຫ່ງຊາດ.

## ກວດແກ້ໂດຍ:

1. ທ່ານ ນາງ. ເພັດສະໝອນ ສອນ, ຮອງຫົວໜ້າສູນສະຖິຕິແຫ່ງຊາດ;
2. ທ່ານ ຄໍາພັນ ຈະເລີນຜົນ, ຫົວໜ້າກົມສະຖິຕິເສດຖະກິດ;
3. ທ່ານ ນາງ ສາລີກາ ຈັນທະລາວົງ, ຮອງຫົວໜ້າກົມສະຖິຕິເສດຖະກິດ;
4. ທ່ານ ນາງ ຄໍາເມີງ ບັນນະລາດ, ຮອງຫົວໜ້າກົມສະຖິຕິເສດຖະກິດ.

## ທີມງານຂຽນບົດລາຍງານໂດຍ:

5. ທ່ານ ສາຍຄໍາ ສີສົມບັດ, ຫົວໜ້າພະແນກສະຖິຕິຂະແໜງການ ແລະ ລາຄາ;
6. ທ່ານ ເຢວົງ ໄຊຊະນະ, ວິຊາການພະແນກສະຖິຕິຂະແໜງການ ແລະ ລາຄາ, ກົມສະຖິຕິເສດຖະກິດ;
7. ທ່ານ ນາງ ພຸດ ອຸທາ, ວິຊາການພະແນກສະຖິຕິຂະແໜງການ ແລະ ລາຄາ, ກົມສະຖິຕິເສດຖະກິດ;
8. ທ່ານ ນາງ ກ່ອກ ພົມມະຈັນ, ວິຊາການພະແນກສະຖິຕິຂະແໜງການ ແລະ ລາຄາ, ກົມສະຖິຕິເສດຖະກິດ.

## ຜູ້ອອກແບບ, ຈັດໜ້າ ແລະ ພິມ

9. ທ່ານ ເຢວົງ ໄຊຊະນະ, ວິຊາການພະແນກສະຖິຕິຂະແໜງການ ແລະ ລາຄາ, ກົມສະຖິຕິເສດຖະກິດ;
10. ທ່ານ ນາງ ທິບຕາວັນ ຈັນທະວົງ, ວິຊາການພະແນກສະຖິຕິຂະແໜງການ ແລະ ລາຄາ, ກົມສະຖິຕິເສດຖະກິດ;
11. ທ່ານ ນາງ ກ່ອກ ພົມມະຈັນ, ວິຊາການພະແນກສະຖິຕິຂະແໜງການ ແລະ ລາຄາ, ກົມສະຖິຕິເສດຖະກິດ.

# ຄໍານໍາ

ປະຕິບັດຕາມພາລະບົດບາດ ແລະ ແຜນພັດທະນາລະບົບສະຖິຕິແຫ່ງຊາດ ແບບຍືນຍົງ 2016-2025 ແລະ ວິໄສທັດ 2030 ເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການ ທາງດ້ານຂໍ້ມູນສະຖິຕິ ທາງການ ຮັບໃຊ້ໃຫ້ແກ່ການ ຕິດຕາມ, ປະເມີນຕີລາຄາຜົນສໍາເລັດ ຂອງການຈັດຕັ້ງປະຕິບັດກໍ່ຄືການສ້າງແຜນ ພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະຈໍາປີ ກໍ່ຄື ຕີລາຄາຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດ ແຜນພັດທະນາ ເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ສູນສະຖິຕິແຫ່ງຊາດ ໄດ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງສ້າງປື້ມບົດລາຍງານ ສະຖິຕິການຄ້າລະຫວ່າງປະເທດດ້ານສິນຄ້າ ປີ 2022.

ປື້ມບົດລາຍງານສະຖິຕິການຄ້າດ້ານສິນຄ້າລະຫວ່າງປະເທດ ແມ່ນຜະລິດຕະພັນໜຶ່ງຂອງສູນສະຖິຕິແຫ່ງຊາດ ໂດຍໄດ້ສັງລວມຂໍ້ມູນການສົ່ງອອກ ແລະ ນໍາເຂົ້າ ສິນຄ້າຈາກ ກົມພາສີ, ກະຊວງການເງິນ ແລະ ກົມແຜນການ ແລະ ການຮ່ວມມື, ກະຊວງພະລັງງານ ແລະ ບໍ່ແຮ່. ປື້ມບົດລາຍງານສະບັບນີ້ ສ່ອງແສງເຖິງສະພາບການເໜັງຕີງ ດ້ານການຄ້າ ຂອງ ສປປ ລາວ ໃນໄລຍະຜ່ານມາ ເຊິ່ງການສັງລວມຂໍ້ມູນແມ່ນໄດ້ຜ່ານຂະບວນການຜະລິດຂໍ້ມູນສະຖິຕິ ບົນພື້ນຖານຫຼັກການ, ລະບອບວິທະຍາສາດດ້ານສະຖິຕິຕາມມາດຕະຖານ ແລະ ຜ່ານຂະບວນການ ປຶກສາຫາລື ທີ່ມີຄວາມເປັນເອກະພາບສູງ ໃນລະບົບສະຖິຕິແຫ່ງຊາດ. ບົດລາຍງານສະບັບນີ້ປະກອບມີ 3 ພາກຄື ພາກທີ 1: ສະພາບລວມທີ່ເວົ້າເຖິງສະພາບເສດຖະກິດ ແລະ ການຄ້າຂອງສາກົນ ຂອງພາກພື້ນ-ສາກົນ ແລະ ເສດຖະກິດລາວໂດຍຫຍໍ້; ພາກທີ 2: ລົງເລິກກ່ຽວກັບສະພາບການຄ້າຂອງ ສປປ ລາວ; ສ່ວນພາກທີ 3: ກ່ຽວກັບລະບອບວິທີການລາຍງານ ແລະ ບາງນິຍາມກ່ຽວກັບການຄ້າ.

ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ຂໍສະແດງຄວາມຮູ້ບຸນຄຸນມາຍັງພັກ-ລັດຖະບານ ທີ່ໃຫ້ຄວາມສໍາຄັນ, ເອົາໃຈໃສ່ ໃນການພັດທະນາລະບົບສະຖິຕິແຫ່ງຊາດ ຂອງປະເທດເຮົາໃຫ້ນັບມື້ນັບເຕີບໃຫຍ່ຂຶ້ນເລື້ອຍໆ ໂດຍສະເພາະແມ່ນ ຄະນະພັກ-ຄະນະນໍາ ກະຊວງແຜນການ ແລະ ການລົງທຶນ ທີ່ໄດ້ລົງເລິກນໍາພາ- ຊີ້ນໍາ ແລະ ຄຸ້ມຄອງວຽກງານສະຖິຕິໃຫ້ໄດ້ຮັບຜົນດີ, ສ້າງປະຖົມປັດໄຈ ກ້າວໄປສູ່ການສ້າງລະບົບສະຖິຕິ ແຫ່ງຊາດທີ່ມີຄວາມຄົບຖ້ວນ, ຊັດເຈນ, ທັນສະໄໝ ແລະ ທັນການ. ຂໍສະແດງຄວາມຂອບໃຈມາຍັງກົມພາສີ, ກະຊວງການເງິນ, ກົມແຜນການ ແລະ ການຮ່ວມມື, ກະຊວງພະລັງງານ ແລະ ບໍ່ແຮ່, ບັນດາກະຊວງທີ່ກ່ຽວຂ້ອງ ແລະ ຜູ້ປະກອບການໃນການປ້ອນຂໍ້ມູນສະຖິຕິການນໍາເຂົ້າ-ສົ່ງການອອກດ້ານສິນຄ້າທີ່ໄດ້ໃຫ້ການຮ່ວມມືຕະຫລອດມາ. ສູນສະຖິຕິແຫ່ງຊາດ ຍິນດີຮັບເອົາຂໍ້ສະເໜີ, ຄໍາຄິດເຫັນ ແລະ ຄໍາຕໍານິຕິຊົມ ເພື່ອເປັນແນວທາງໃນການປັບປຸງປື້ມບົດລາຍງານສະຖິຕິການຄ້າລະຫວ່າງປະເທດດ້ານສິນຄ້າ ໃນຕໍ່ໜ້າ. ພ້ອມດຽວກັນນີ້ ສູນສະຖິຕິແຫ່ງຊາດ ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງບັນດາທ່ານຜູ້ທີ່ໃຫ້ຄວາມສົນໃຈ ແລະ ນໍາໃຊ້ຂໍ້ມູນສະຖິຕິທາງການ ຂອງສູນສະຖິຕິແຫ່ງຊາດ.

**ຫົວໜ້າສູນສະຖິຕິແຫ່ງຊາດ**

**ພອນສະຫລີ ສຸກາລະຫວັດ**

## ສາລະບານ

ຄຳນຳ ..... ii
ອະທິບາຍຄຳສັບຫຍໍ້ ..... iv
ພາກທີ 1: ສະພາບລວມ ..... 1
I. ສະພາບເສດຖະກິດ ແລະ ການຄ້າ ຂອງສາກົນ ແລະ ພາກພື້ນ ..... 1
II. ສະພາບເສດຖະກິດພາຍໃນປະເທດ ..... 3
ພາກທີ 2: ການຄ້າດ້ານສິນຄ້າ ລະຫວ່າງປະເທດ ຂອງ ສປປ ລາວ ປີ 2022 ..... 6
I. ມູນຄ່າການຄ້າ ແລະ ດຸນການຄ້າ ..... 6
II. ການສົ່ງອອກ ..... 8
III. ການນຳເຂົ້າ ..... 16
ພາກທີ 3: ເຕັກນິກລະບອບວິທີ, ແຫຼ່ງຂໍ້ມູນ ແລະ ແຜນໃນຕໍ່ໜ້າ ..... 25
I. ນິຍາມ ແລະ ວິທີການຄິດໄລ່ ..... 25
II. ແຫຼ່ງຂໍ້ມູນ ແລະ ການເກັບກຳຂໍ້ມູນ ..... 26
III. ຂໍ້ມູນທີ່ສາມາດສະໜອງໃຫ້ຜູ້ຊົມໃຊ້ ..... 26
IV. ແຜນການຕໍ່ໜ້າ ..... 26
ເອກະສານອ້າງອີງ ..... 28
ຕາຕະລາງຊ້ອນທ້າຍ ..... 29

# ອະທິບາຍຄຳສັບຫຍໍ້

| ລ/ດ | ອັກສອນຫຍໍ້ | ພາສາອັງກິດ | ພາສາລາວ |
|---|---|---|---|
| 1 | AHTN | ASEAN Harmonized Tariff Nomenclature | ສາລະບານອັດຕາພາສີລະບົບເອກະພາບອາຊຽນ |
| 2 | ASEAN | The Association of Southeast Asian Nations | ອາຊຽນ |
| 3 | ASYCUDA | The Automated System for Customs Data | ຂັ້ນຕອນແຈ້ງພາສີນຳເຂົ້າສິນຄ້າຢູ່ດ່ານພາສີສາກົນດ້ວຍລະບົບອາຊິກຸດາ |
| 4 | CLMV | Cambodia, Lao PDR, Myanmar and Vietnam | ກຳປູເຈຍ, ສປປ ລາວ, ພະມ້າ ແລະ ຫວຽດນາມ |
| 5 | CPC | Customs Procedures Code | ລະບອບໃບແຈ້ງພາສີ |
| 6 | DTTS | Data Transmission Toll System | ລະບົບເຄື່ອງມືສົ່ງຂໍ້ມູນ |
| 7 | GDP | Gross Domestic Product | ລວມຍອດຜະລິດຕະພັນພາຍໃນ |
| 8 | IMF | International Monetary Fund | ກອງທຶນການເງິນສາກົນ |
| 9 | IMTS | International Merchandise Trade Statistics | ສະຖິຕິການຄ້າລະຫວ່າງປະເທດດ້ານສິນຄ້າ |
| 10 | SQL | Structured Query Language | ເຄື່ອງມືການກວດແກ້ ແລະ ສະໜອງຂໍ້ມູນ |
| 11 | WGIMTS | Working Group International Merchandise Trade Statistics | ໜ່ວຍງານສະຖິຕິການຄ້າລະຫວ່າງປະເທດ້ານສິນຄ້າ |
| 12 | WTO | World Trade Organization | ອົງການການຄ້າໂລກ |

# ພາກທີ 1: ສະພາບລວມ

## I. ສະພາບເສດຖະກິດ ແລະ ການຄ້າ ຂອງສາກົນ ແລະ ພາກພື້ນ[1]

ປີ 2022 ສະພາບການຂອງໂລກ ແລະ ພາກພື້ນມີຄວາມຜັນແປຢ່າງສັບສົນ, ຫລາຍປະເທດໃນໂລກຍັງ ສືບຕໍ່ພົບກັບຄວາມບໍ່ສະຖຽນລະພາບທາງດ້ານເສດຖະກິດ-ການເມືອງ, ບັນຫາຄວາມຂັດແຍ່ງທາງດ້ານການເມືອງ ຜົນປະໂຫຍດທາງດ້ານການຄ້າລະຫວ່າງປະເທດມະຫາອຳນາດ, ຜົນກະທົບຈາກການໄພທຳມະຊາດ ແລະ ຄວາມບໍ່ແນ່ນອນຂອງການລະບາດຂອງ ເຊື້ອພະຍາດ COVID-19, ການປ່ຽນແປງລາຄານ້ຳມັນເຊື່ອໄຟ, ລາຄາສິນຄ້າບໍລິໂພກ ແລະ ການຜັນຜວນທາງດ້ານການເງິນ-ເງິນຕາ. ກອງທຶນການເງິນສາກົນ (International Monetay Fund) ໄດ້ລາຍງານໃນເມສາ 2023 ເສດຖະກິດໂລກ ປີ 2022 ຂະຫຍາຍຕົວພຽງ 3,2%. ໃນນັ້ນ ບັນດາປະເທດເສດຖະກິດໃຫຍ່ ມີການຂະຫຍາຍຕົວທີ່ຊະລໍຕົວ ເຊັ່ນ: ສະຫະລັດອາເມລິກາ ຂະຫຍາຍຕົວ 2%, ຍີປຸ່ນ 1,4%, ສປ ຈີນ 3,0%. ສ່ວນບັນດາປະເທດໃນຂົງເຂດອາຊຽນກໍ່ຂະຫຍາຍຕົວໃນລະດັບແຕກຕ່າງກັນ ເຊັ່ນ: ມາເລເຊຍ 6,7%, ຟີລິປິນ 7%, ໄທ 3,2%, ສສ ຫວຽດນາມ 7%, ກຳປູເຈຍ 5,1% ແລະ ມຽນມາ 2%.

ນອກຈາກນັ້ນ ເສດຖະກິດໂລກຍັງພົບກັບອັດຕາເງິນເຟີ້ທີ່ເພີ່ມຂຶ້ນ ເຊິ່ງເພີ່ມຈາກ 4,7% ໃນປີ 2021 ເປັນ 8,7% ໃນປີ 2022 ເນື່ອງມາຈາກການແຜ່ລະບາດຂອງໂລກລະບາດເຊື່ອພະຍາດ ໂຄວິດ-19 ທີແກ່ຍາວ, ບັນຫາຄວາມຄັດແຍ່ງ ລະຫວ່າງ ຣັດເຊຍ ແລະ ອຸແກຣນ ນຳໄປສູ່ການຈຳກັດການສະໜອງນ້ຳມັນເຊື່ອໄຟ ແລະ ສິນຄ້າ ຈຶ່ງເຮັດໃຫ້ລາຄານ້ຳມັນເຊື່ອໄຟ ແລະ ລາຄາສິນຄ້າ ກໍ່ຄືເງິນເຟີ້ເພີ່ມ ໃນປີ 2022. ໃນນັ້ນ ລາຄານ້ຳມັນເຊື້ອໄຟ ເພີ່ມຂຶ້ນຈາກ 72,87 ໂດລາ/ບາເຣນ ໃນເດືອນ 12 ປີ 2021 ມາເປັນ 116,8 ໂດລາ/ບາເຣນ ໃນເດືອນ 6 ປີ 2022 ກ່ອນຈະລົງມາຢູ່ໃນລະດັບ 78,85 ໂດລາ/ບາເຣນ ໃນເດືອນ 12 ປີ 2022. ນອກຈາກນັ້ນ, ລາຄາສິນຄ້າອື່ນໆເມື່ອທຽບກັບປີ 2021 ກໍ່ເພີ່ມຂຶ້ນເຊັ່ນ: ເຂົ້າບາເລ (Wheat) ເພີ່ມຂຶ້ນ 36%, ສາລີແຂງ (Maize) ເພີ່ມຂຶ້ນ 23%, ຊີ້ນງົວ 7% ແລະ ໄກ່ ເພີ່ມຂຶ້ນ 48%. ສ່ວນລາຄາເຂົ້າ, ທອງ, ເງິນ ແລະ ກົ່ວ ຫລຸດລົງເມື່ອທຽບກັບປີຜ່ານມາ.

ເນື່ອງຈາກ ສະພາບການເພີ່ມຂຶ້ນຂອງລາຄາສິນຄ້າຄືດັ່ງກ່າວ ໄດ້ເປັນປັດໄຈໜຶ່ງທີ່ເຮັດໃຫ້ມູນຄ່າການຄ້າເພີ່ມຂຶ້ນ ເຊິ່ງເພີ່ມຂຶ້ນຈາກ 45 ພັນຕື້ ໂດລາ ໃນປີ 2021 ມາເປັນ 49 ພັນຕື້ໂດລາ ໃນປີ 2022 ຫລື ເພີ່ມຂຶ້ນ 9%. ແຕ່ເຖິງຢ່າງໃດກໍ່ຕາມທາງດ້ານປະລິມານແລ້ວ, ປະລິມານການຄ້າເພີ່ມຂຶ້ນພຽງ 2,7% ເມື່ອທຽບກັບປີຜ່ານມາ (ປີ 2021 ທຽບໃສ່ປີ 2020 ເພີ່ມຂຶ້ນ 9,4%). ສຳລັບມູນຄ່າການສົ່ງອອກຂອງໂລກເພີ່ມຂຶ້ນ ຈາກ 22.145 ຕື້ໂດລາ ໃນປີ 2021 ເປັນ 24.018 ຕື້ໂດລາ ໃນປີ 2022 ເຊິ່ງເພີ່ມຂຶ້ນ 8%. ໃນນັ້ນ, ໃນຈຳນວນ 20 ລຳດັບທຳອິດປະເທດສົ່ງອອກຕົ້ນຕໍໃນປີ 2022 ແມ່ນ ປະເທດຫວຽດນາມມີມູນຄ່າການສົ່ງອອກເພີ່ມຂຶ້ນຫລາຍກວ່າໝູ່ ເຊິ່ງສາມາດສົ່ງອອກເພີ່ມຂຶ້ນເຖິງ 36,4% ເມື່ອທຽບກັບປີຜ່ານມາ, ຮອງລົງມາແມ່ນ ປະເທດການາດາ ສົ່ງອອກເພີ່ມຂຶ້ນ 18,5%, ອາເມລິກາ 17.6%, ແມັກຊິກໂກ 16,9%, ອິດສະຕາລີ 16,4%, ສ່ວນ ສປ ຈີນ ເພີ່ມຂຶ້ນພຽງ 6,9%. ສ່ວນມູນຄ່າການນຳເຂົ້າເພີ່ມຂຶ້ນ 9,4% ເຊິ່ງເພີ່ມຈາກ 22.442 ຕື້ໂດລາ ໃນປີ 2021 ມາເປັນ 24.543 ຕື້ໂດລາໃນປີ 2023. ໃນນັ້ນ ໃນຈຳນວນ 20 ລຳດັບທຳອິດຂອງປະເທດທີ່ມີການນຳເຂົ້າຫລາຍກວ່າໝູ່ ແມ່ນ ປະເທດຕຸລາກີ ນຳເຂົ້າເພີ່ມຂຶ້ນຫລາຍກວ່າໝູ່ ເພີ່ມຂຶ້ນ 34% ເມື່ອທຽບກັບປີຜ່ານມາ ຮອງລົງມາແມ່ນປະເທດອີຕາລີ ເພີ່ມຂຶ້ນ31%, ແມັກຊິກໂກ ແລະ ເກົາຫລີໃຕ້ ນຳເຂົ້າເພີ່ມຂຶ້ນເທົ່າກັນໃນລະດັບ 19%,

---

[1] ແຫລ່ງຂໍ້ມູນໃນການລາຍງານກ່ຽວກັບການຂະຫຍາຍຕົວເສດຖະກິດ ແມ່ນອີງໃສ່ຂໍ້ມູນການລາຍງານຂອງອົງການ ກອງທຶນການເງິນສາກົນ, ສ່ວນມູນຄ່າການຄ້າແມ່ນອີງໃສ່ຂໍ້ມູນຈາກ TRADE MAP ໂດຍເປັນການສັງລວມຂໍ້ມູນມາຈາກ UN COMTRADE ແລະ ICT Statistics.

ຍີ່ປຸ່ນ, ຫວຽດນາມ ແລະ ເຢຍລະມັນ ນຳເຂົ້າເພີ່ມຂຶ້ນເທົ່າກັນໃນລະດັບ 17%, ສ່ວນອາເມລິກາ ແລະ ຈີນ ນຳເຂົ້າເພີ່ມຂຶ້ນ 15% ແລະ 2% ຕາມລຳດັບ.

ຈາກສະພາບການນຳເຂົ້າ ແລະ ສົ່ງອອກດັ່ງກ່າວ ຈຶ່ງເຮັດໃຫ້ ຈີນ ມີດຸນການຄ້າເກີນດຸນຫລາຍກວ່າໝູ່ ເຊິ່ງເປັນປະເທດທີ່ສືບຕໍ່ມີດຸນການຄ້າເກີນດຸນມາຫລາຍປີ. ປະເທດທີ່ມີມູນຄ່າເກີນດຸນການຄ້າສູງຮອງຈາກ ຈີນ ແມ່ນປະເທດເຢຍລະມັນ, ອິດສະຕາລີ ແລະ ເນເທີແລນ. ນອກຈາກນັ້ນ, ບັນດາປະເທດທີ່ສົ່ງອອກນ້ຳມັນ ແລະ ອາຍແກັດ ກໍ່ມີມູນຄ່າການຄ້າເກີນດຸນທີ່ຫລາຍເປັນຕົ້ນແມ່ນ ລັດເຊຍ, ຊາອູອາລາເບຍ ແລະ ອາລັບເອມີເລດ.

ສຳລັບປະເທດໃນຂົງເຂດພາກພື້ນ ແລະ ໃກ້ຄຽງອື່ນ ນອກຈາກຫວຽດນາມ ແລະ ຈີນແລ້ວ, ປະເທດມາເລເຊຍ, ອິນໂດເນເຊຍ ແລະ ສິງກະໂປ ລ້ວນແຕ່ມີທັງມູນຄ່າການສົ່ງອອກເພີ່ມຂຶ້ນ ແລະ ມີດຸນການຄ້າເກີນດຸນ ເຊັ່ນ ສິງກະໂປ ມີມູນຄ່າການສົ່ງອອກເພີ່ມຂຶ້ນ 12,5% ແລະ ດຸນການຄ້າເກີນດຸນ 39 ພັນ ລ້ານໂດລາ, ອິນໂດເນເຊຍ ມີມູນຄ່າການສົ່ງອອກເພີ່ມຂຶ້ນ 26% ແລະ ດຸນການຄ້າເກີນດຸນ 54 ພັນລ້ານໂດລາ, ມາເລເຊຍ ເພີ່ມຂຶ້ນ 18% ແລະ ເກີນດຸນການຄ້າ 58 ພັນລ້ານໂດລາ. ສ່ວນປະເທດໄທ ແລະ ກຳປູເຈຍ ເຖິງຈະມີມູນຄ່າການສົ່ງອອກເພີ່ມຂຶ້ນ ແຕ່ດຸນການຄ້າຍັງຂາດດຸນ ເນື່ອງຈາກມີມູນຄ່າການນຳເຂົ້າເພີ່ມຂຶ້ນເຊັ່ນກັນ ເຊັ່ນ ປະເທດໄທ ມູນຄ່າການສົ່ງອອກເພີ່ມຂຶ້ນ 6% ແລະ ຂາດດຸນ 22 ພັນລ້ານໂດລາ, ກຳປູເຈຍ ສົ່ງອອກເພີ່ມຂຶ້ນ 17% ແລະ ຂາດດຸນການຄ້າ 9 ພັນລ້ານໂດລາ.

**ຮູບສະແດງ 1:** ການຄ້າໂລກ ແລະ ການຂະຫຍາຍຕົວຂອງເສດຖະກິດ




**ແຫລ່ງຂໍ້ມູນ:** TRADE MAP, ອົງການການຄ້າໂລກ (WTO) ແລະ ກອງທຶນການເງິນລະຫວ່າງປະເທດ (IMF)

**ຮູບສະແດງ 2:** ປະເທດສົ່ງອອກ ແລະ ນຳເຂົ້າຕົ້ນຕໍຂອງໂລກ (ເປີເຊັນຕໍ່ການສົ່ງອອກ ແລະ ນຳເຂົ້າທັງໝົດຂອງໂລກ)




**ແຫຼ່ງຂໍ້ມູນ:** TRADE MAP, 2023

## II. ສະພາບເສດຖະກິດ ສປປ ລາວ

ປີ 2022 ເຖິງແມ່ນວ່າ ສປປ ລາວຈະປະສົບກັບສະພາບວິກິດການເງິນເຟີ້ ແຕ່ຖ້າທຽບກັບປີຜ່ານມາເສດຖະກິດໂດຍລວມ ຍັງຢູ່ໃນທ່າກ້າວ ແລະ ໄດ້ຟື້ນຕົວ ຍ້ອນເປັນປີເປີດປະເທດຄືນໃໝ່ ການບໍລິການເປັນຕົ້ນແມ່ນບໍລິການການທ່ອງທ່ຽວຄ່ອຍໆດີຂຶ້ນ, ການລົງທຶນ ແລະ ການຄ້າ ກໍ່ພວມປັບຕົວເທື່ອລະກ້າວ. ໃນປີ 2022 ເສດຖະກິດຂອງ ສປປ ລາວ ຂະຫຍາຍຕົວໃນລະດັບ 4,4%, ຄິດໄລ່ເປັນມູນຄ່າລາຄາໃນປີ 215,609 ຕື້ກີບ ແລະ ສະເລ່ຍຕໍ່ຫົວຄົນ 2022 ໂດລາສະຫາລັດ (ອັດຕາແລກປ່ຽນສະເລ່ຍໝົດປີ 14,327 ກີບຕໍ່ໂດລາ), ຈຳນວນປະຊາກອນ 7.442.749 ຄົນ. ເມື່ອການເຕີບໂຕໃສ່ປີ 2021 ແມ່ນເພີ່ມຂຶ້ນເລັກນ້ອຍ (ໃນປີ 2021 GDP ຂະຫຍາຍຕົວ 3,5%). ເມື່ອສັງເກດເບິ່ງສາມຂະແໜງການຫຼັກ ເຫັນວ່າ ຂະແໜງບໍລິການເປັນຂະແໜງທີ່ຂະຫຍາຍຕົວສູງກວ່າໝູ່ ເຊິ່ງຂະຫຍາຍຕົວ 5% ແລະ ປະກອບສ່ວນຕໍ່ການເຕີບໂຕຫລາຍກວ່າໝູ່ ກວມ 43% ຂອງການເຕີບໂຕເສດຖະກິດ, ຮອງລົງມາແມ່ນ ຂະແໜງອຸດສາຫະກຳ ຂະຫຍາຍຕົວ 4,4% ແລະ ປະກອບສ່ວນຕໍ່ການເຕີບໂຕກວມ 38,6%, ຂະແໜງກະສິກຳ ຂະຫຍາຍໂຕ 3,4% ແລະ ປະກອບສ່ວນຕໍ່ການເຕີບໂຕ 11,4%.

ພ້ອມກັນນັ້ນ, ເມື່ອສັງເກດເບິ່ງຂະແໜງການຍ່ອຍເຫັນວ່າ ຂະແໜງການຕົ້ນຕໍທີ່ຊຸກຍູ້ໃຫ້ເສດຖະກິດມີການຟື້ນຕົວໃນປີ 2022 ແມ່ນ: (1) ຂະແໜງກໍ່ສ້າງ ສ້າງມູນຄ່າເພີ່ມ 20.222 ຕື້ກີບ, ປະກອບ ສ່ວນໃນການຂະຫຍາຍຕົວເສດຖະກິດ 0,8% ທຽບໃສ່ປີຜ່ານມາ ເຊິ່ງມາຈາກໂຄງການກໍ່ສ້າງຂະໜາດໃຫຍ່ ເຊັ່ນ: ໂຄງການກໍ່ສ້າງທາງຫລວງແຫ່ງຊາດ ເລກທີ 13, ໂຄງການກໍ່ສ້າງຂົວຂ້າມນ້ຳຂອງ ແຫ່ງທີ 5, ການກໍ່ສ້າງສະໜາມ ບິນບໍ່ແກ້ວ, ກໍ່ສ້າງທາງລົດໄຟລາວ-ໄທ ແລະ ໂຄງການພັດທະນາພື້ນຖານໂຄງລ່າງອື່ນໆ; (2). ຂະແໜງການຄ້າຂາຍຍົກ - ຂາຍຍ່ອຍ ສ້າງມູນຄ່າເພີ່ມ 24.771 ຕື້ກີບ, ປະກອບສ່ວນ 0,6% ເຊິ່ງເຫັນວ່າຂະຫຍາຍດີກວ່າປີຜ່ານມາ (ປີຜ່ານມາປິດປະເທດ) ສະແດງອອກໃນມູນຄ່າການຈໍລະຈອນສິນຄ້າປະຕິບັດໄດ້ 72.622 ຕື້ກີບມູນຄ່າ ການນຳເຂົ້າສິນຄ້າທັງໝົດ 7.113 ລ້ານໂດລາ; (3). ຂະ ແໜງການຂົນສົ່ງ ແລະ ສາງ ສ້າງມູນຄ່າເພີ່ມ 3.184 ຕື້ກີບ ປະກອບສ່ວນ 0,4%, ເຊິ່ງໃນຕົ້ນປີ 2022 ໄດ້ມີການເປີດນຳໃຊ້ທາງລົດໄຟ-ລາວຈີນ ແບບປົກກະຕິ, ເຮັດໃຫ້ການຂົນສົ່ງຂະຫຍາຍຕົວ 28,8% ສະແດງອອກໃນປີ 2022 ລົດໄຟລາວ-ຈີນ ສາມາດຂົນສົ່ງໂດຍສານໄດ້ທັງໝົດ 1.396 ພັນຄົນ, ຂົນສົ່ງສິນຄ້າໄດ້ 2.200 ພັນໂຕນ, ການເດີນທາງໂດຍສານ ລະຫວ່າງແຂວງ ແລະ ລະຫວ່າງປະເທດເປີດເປັນປົກກະຕິເຮັດໃຫ້ສາມາດບັນລຸການຂົນສົ່ງໂດຍສານທັງໝົດ 85.894 ພັນຄົນ (ລື່ນແຜນ 125%) ແລະ ການຂົນສົ່ງສິນຄ້າປະຕິບັດໄດ້ 10.029,8 ພັນໂຕນ (ລື່ນແຜນ 180%) ທຽບໃສ່ປີຜ່ານມາເພີ່ມຂຶ້ນ 301% ແລະ 46% ຕາມລຳດັບ; (4). ຂະແໜງການໄຟຟ້າ ສ້າງມູນຄ່າເພີ່ມສູງເຖິງ 24.542 ຕື້ກີບ ປະກອບສ່ວນ 0,3% ໃນການຂະຫຍາຍຕົວຂອງເສດຖະກິດ, ພົ້ນເດັ່ນ ມີເຂື່ອນ ຂະໜາດໃຫຍ່ທີ່ເພີ່ມການ ຜະລິດສູງຂຶ້ນເຊັ່ນ: ເຂື່ອນໄຟຟ້ານ້ຳງື່ມ 1 ພາກຂະຫຍາຍ ເພີ່ມຂຶ້ນ 21%; ເຂື່ອນໄຟຟ້າເຊ ປຽນ-ເຊນ້ຳນ້ອຍ ເພີ່ມ ຂຶ້ນ 15% ແລະ ເຂື່ອນພະລັງງານຄວາມຮ້ອນຫົງສາເພີ່ມຂຶ້ນ 2,5% ແລະ 5). ຂະແໜງອຸດສາຫະກຳປຸງ ແຕ່ງ ອື່ນໆສ້າງມູນຄ່າເພີ່ມ 10.775 ຕື້ກີບ ປະກອບສ່ວນ 0,3% ໃນນັ້ນພົ້ນເດັ່ນ ແມ່ນການລົງທຶນການຜະລິດຂະໜາດໃຫຍ່ໃນເຂດເສດຖະກິດພິເສດໃນການຜະລິດເຫຍື່ອເຈັ້ຍ ແລະ ການຜະລິດອຸດສາຫະກຳອື່ນໆ.

ເຖິງແມ່ນວ່າເສດຖະກິດຂອງ ສປປ ລາວ ຈະຟື້ນໂຕ ແລະ ຂະຫຍາຍຕົວດີຂຶ້ນກໍ່ຕາມ, ໃນປີ 2022 ຍັງເປັນປີທີ່ ສປປ ລາວ ປະສົບກັບບັນຫາການເພີ່ມຂຶ້ນຂອງລາຄາສິນຄ້າ ກໍ່ຄືອັດຕາເງິນເຟີ້ ທີ່ກັບມາສູງຂຶ້ນໃນຮອບຫລາຍປີ ເຊິ່ງ ສປປ ລາວ ເຄີຍມີອັດຕາເງິນເຟີ້ທີ່ສູງຫລາຍແມ່ນໄລຍະວິກິດການເງິນໃນທ້າຍຊຸມປີ 1990. ປີ 2022 ອັດຕາເງິນເຟີ້ຂອງ ສປປ ລາວ ເພີ່ມຈາກລະດັບ 1 ຕົວເລກ ຄື 6,3% ໃນ ເດືອນ ມັງກອນ ມາເປັນ ລະດັບ 2 ຕົວເລກ ໃນເດືອນພຶດສະພາ ເປັນຕົ້ນມາ ແລະ ສະເລ່ຍໝົດປີ 2022 ຢູ່ໃນລະດັບ 23% (ປີ 2021 ແມ່ນ 3,8%). ໃນນັ້ນ, ທຸກໝວດແມ່ນມີອັດຕາເງິນເຟີ້ສູງຂຶ້ນໝົດ

ແລະ ເມື່ອທຽບໃສ່ປີຜ່ານມາ ໝວດທີ່ ມີອັດຕາເງິນເຟີ້ສູງກວ່າໝູ່ ແມ່ນ ໝວດຄົມມະນາຄົມ ແລະ ຂົນສົ່ງ ຢູ່ໃນລະດັບ 41,3% ເນື່ອງຈາກວ່າ ລາຄາພາຫະນະຂົນສົ່ງ ເພີ່ມຂຶ້ນ 42,0%, ອຸປະກອນການຂົນສົ່ງ ເພີ່ມຂຶ້ນ 50,0% ໃນນີ້ ເຄື່ອງອາໄຫຼ່ ແລະ ການສ້ອມແປງ ເພີ່ມຂຶ້ນ 19,4%, ນ້ຳມັນເຊື້ອໄຟ ເພີ່ມຂຶ້ນ 83,3% ແລະ ການບໍລິການຂົນສົ່ງ ເພີ່ມຂຶ້ນ 12,2%; ຮອງລົງມາແມ່ນ ໝວດຮັກສາສຸຂະພາບ ແລະ ຢາ ຢູ່ໃນລະດັບ 27,6%; ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ 22,0%; ໝວດຮ້ານອາຫານ ແລະ ໂຮງແຮມ ເພີ່ມຂຶ້ນ 18,8% ແລະ ໝວດເຄື່ອງໃຊ້ໃນເຮືອນ ເພີ່ມຂຶ້ນ 18,7%.

ໃນປີ 2022 ກໍ່ຄືສະພາບປະຈຸບັນ, ສປປ ລາວ ແມ່ນມີອັດຕາເງິນເຟີ້ສູງຫລາຍ ແລະ ສູງກວ່າໝູ່ໃນບັນດາປະເທດໃນຂົງເຂດອາຊຽນ ແລະ ປະເທດເພື່ອນບ້ານ. ສາເຫດການເພີ່ມຂຶ້ນຂອງລາຄາມາຈາກທັງປັດໄຈພາຍໃນ ແລະ ປັດໄຈພາຍນອກ ເຊັ່ນ: (1) ສະຖານະການການຕໍ່ສູ້ ລະຫວ່າງລັດເຊຍ ແລະ ອຸແກຣນ ແລະ ຄວາມຂັດແຍ່ງທາງດ້ານເສດຖະກິດຂອງປະເທດມະຫາອຳນາດ ເຮັດໃຫ້ມີການຈຳກັດການຜະລິດ ແລະ ຂົນສົ່ງພະລັງງານເຊື້ອໄຟ ແລະ ສິນຄ້າກະສິກຳ ເຮັດໃຫ້ລາຄານ້ຳມັນ ແລະ ບາງສິນຄ້າກະສິກຳ ຕະຫລາດໂລກຖີບໂຕຂຶ້ນສູງ ເຊິ່ງເຮັດໃຫ້ລາຄານຳເຂົ້າຂອງ ສປປ ລາວ ສູງຂຶ້ນ; (2) ທະນາຄານກາງຂອງປະເທດເສດຖະກິດຂະໜາດໃຫຍ່ ໄດ້ນຳໃຊ້ນະໂຍບາຍແບບຮັດກຸມເພື່ອຫລຸດຜ່ອນອັດຕາເງິນເຟີ້ໂດຍການຂຶ້ນອັດຕາດອກເບ້ຍນະໂຍບາຍ ອັນໄດ້ໄດ້ກະທົບເຖິງການໄຫລຂອງເງິນຕາ ແລະ ເຮັດໃຫ້ເງິນຕາແຂງຄ່າຂຶ້ນໂດຍສະເພາະແມ່ນເງິນໂດລາແຂງຄ່າ. ເຊັ່ນດຽວກັນນັ້ນ ເງິນປະເທດຄູ່ຄ້າກໍ່ອ່ອນຄ່າລົງ ລວມທັງເງິນກີບ ເຊິ່ງກະທົບເຖິງລາຄາສິນຄ້ານຳເຂົ້າຂອງ ສປປ ລາວ ມີລາຄາສູງຂຶ້ນ; (3) ຖານຜະລິດພາຍໃນປະເທດແມ່ນຍັງບໍ່ທັນເຂັ້ມແຂງ, ສ່ວນຫລາຍແມ່ນເອື່ອຍອີງ ແລະ ນຳເຂົ້າຈາກຕ່າງປະເທດ ເຊັ່ນ: ສິນຄ້າອຸປະໂພກ, ບໍລິໂພກ, ສິນຄ້າປະພດ ປັດໄຈການຜະລິດ, ເຄື່ອງມື ແລະ ວິທະຍາສາດອື່ນໆ ແມ່ນໄດ້ນຳເຂົ້າ. ດັ່ງນັ້ນ ເມື່ອລາຄາສິນຄ້າຢູ່ຕ່າງປະເທດສູງຂຶ້ນ ຈຶ່ງໄດ້ສົ່ງຜົນໃຫ້ລາຄາສິນຄ້າຢູ່ພາຍໃນປັບໂຕຂຶ້ນຕາມ; (4) ຄວາມອາດສາມາດໃນການແຊກແຊງຕະຫລາດອັດຕາແລກປ່ຽນຍັງມີຄວາມຈຳກັດ, ດັ່ງນັ້ນ ຄ່າຂອງເງິນກີບ ຈຶ່ງອ່ອນຄ່າຫລາຍໄປຕາມຕະຫລາດ ແລະ ເມື່ອເງິນກີບອ່ອນຄ່າ ແມ່ນໄດ້ກະທົບໂດກົງໃສ່ສິນຄ້ານຳເຂົ້າມີລາຄາສູງຂຶ້ນ; (5) ການຄຸ້ມຄອງລາຄາສິນຄ້າຍັງຈຳກັດ ແລະ ທ້າທາຍພໍ່ຄ້າ ແມ່ຄ້າ ຍັງມີການສວຍໂອກາດປັບຂຶ້ນນລາຄາສິນຄ້າໃນທ້ອງຕະຫລາດ ແລະ ຫ້າງຮ້ານຕ່າງໆ; (6) ປັດໄຈຈາກໄພທຳມະຊາດ (ຝົນຕົກ/ນ້ຳຖ້ວມ) ເຮັດໃຫ້ລາຄາສິນຄ້າກະສິກຳປີ 2022 ປັບໂຕຂຶ້ນສູງຫລາຍໃນໄລຍະລະດູຝົນປີ 2022.

**ຮູບສະແດງ 3:** ການປະກອບສ່ວນຕໍ່ການເຕີບໂຕ ແລະ ອັດຕາເງິນເຟີ້ ຂອງ ສປປ ລາວ







**ແຫຼ່ງຂໍ້ມູນ:** ກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ຮູບສະແດງ 4:** ອັດຕາແລກປ່ຽນ ກີບ/ບາດ ແລະ ກີບ/ໂດລາ ແລະ ລາຄານໍ້າມັນ ຢູ່ ສປປ ລາວ




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ

## ພາກທີ 2: ການຄ້າດ້ານສິນຄ້າ ລະຫວ່າງປະເທດ

### I. ມູນຄ່າການຄ້າ ແລະ ດຸນການຄ້າ

#### 1. ມູນຄ່າການຄ້າ

ໃນໄລຍະ 5 ປີຜ່ານມາ, ມູນຄ່າການຄ້າຂອງ ສປປ ລາວ ມີທ່າອ່ຽງເພີ່ມຂຶ້ນທຸກປີ ຍົກເວັ້ນ ປີ 2020 ທີ່ປະສົບກັບການແຜ່ລະບາດຂອງພະຍາດ ໂຄວິດ19 (COVID-19). ມູນຄ່າການຄ້າທັງໝົດ ເພີ່ມ ຂຶ້ນຈາກ 11.663,4 ລ້ານໂດລາ ໃນປີ 2018 ມາເປັນ 11.626,4 ລ້ານໂດລາ ປີ 2019 ແລະ 11.211,5 ລ້ານໂດລາ ໃນປີ ໃນປີ 2020. ພາຍຫຼັງການລະບາດຂອງພະຍາດດັ່ງກ່າວ, ຫລາຍປະເທດກໍ່ໄດ້ມີການຟື້ນຟູເສດຖະກິດ ໂດຍສະເພາະບັນດາປະເທດຄູ່ຄ້າໄດ້ມີມາດຕະການຜ່ອນຜັນ ຈາກລັດຖະບານໃນການສືບຕໍ່ຈັດຕັ້ງປະຕິບັດວຽກງານການຄ້າຢ່າງຕັ້ງໜ້າ ເພື່ອເລັ່ງໃສ່ການສົ່ງອອກສິນຄ້າທີ່ເປັນທ່າແຮງ. ມາຮອດ ປີ 2022 ມູນຄ່າການຄ້າ ຂອງ ສປປ ລາວ ມີທັງໝົດ 15.279,6 ລ້ານໂດລາສະຫະລັດ, ເພີ່ມຂຶ້ນຈາກ 13.584,8 ລ້ານໂດລາ ໃນປີ 2021 ຫຼື ເພີ່ມຂຶ້ນ 12,5%. ພ້ອມກັນນັ້ນ, ຖ້າເບິ່ງອັດຕາການເປີດປະເທດ[2]ກໍ່ເຫັນວ່າມີທ່າອ່ຽງເພີ່ມຂຶ້ນເຊັ່ນກັນ. ອັດຕາການເປີດປະເທດ ເພີ່ມຂຶ້ນ ຈາກ 64,3 % ໃນປີ 2018 ມາເປັນ 71,6% ໃນປີ 2021 ແລະ ມາເປັນ 101,5% ໃນປີ 2022. ແຕ່ເຖິງຢ່າງໃດກໍ່ຕາມ, ມູນຄ່າການຄ້າທີ່ສູງຂຶ້ນໃນປີ 2022 ສ່ວນໜຶ່ງແມ່ນມາຈາກການເພີ່ມຂຶ້ນຂອງລາຄາສິນຄ້າກໍ່ຄືອັດຕາເງິນເຟີ້, ດັ່ງນັ້ນ ມູນຄ່າການຄ້າທີ່ແທ້ຈິງ (ທາງດ້ານປະລິມານໂດຍລວມ) ອາດຈະບໍ່ໄດ້ເພີ່ມຂຶ້ນຫລາຍ.

**ຮູບສະແດງ 5:** ມູນຄ່າການຄ້າໝວດສິນຄ້າ ປີ 2018-2022




**ແຫຼ່ງຂໍ້ມູນ**: ກົມພາສີ, ກະຊວງການເງິນ, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

---

[2]ອັດຕາການເປີດປະເທດ Openness Rate= (ການນໍາເຂົ້າ+ການສົ່ງອອກ/GDP x 100)

## 2. ດຸນການຄ້າ

- ດຸນການຄ້າລວມ

ສປປ ລາວ ປະສົບກັບການຂາດດຸນການຄ້າດ້ານສິນຄ້າ ມາຍາວນານຈົນມາເຖິງ ປີ 2019 ເຊິ່ງເປັນປີທຳອິດທີ່ ສປປ ລາວ ມີດຸນການຄ້າເກີນດຸນ. ຫຼັງຈາກ ປີ 2019 ເປັນຕົ້ນຮອດປະຈຸບັນ (ປີ 2022) ແມ່ນມີດຸນການຄ້າເກີນດຸນ. ດຸນການຄ້າເກີນດຸນຈາກ 31 ລ້ານໂດລາ ໃນປີ 2019 ມາເປັນ 1.180 ລ້ານໂດລາ ໃນປີ 2020 ມາເປັນ 1.808 ລ້ານໂດລາ ໃນປີ 2021 ແລະ ເປັນ 1,563 ລ້ານໂດລາສະຫະລັດ ໃນປີ 2022. ພ້ອມກັນນັ້ນ ອັດຕາດຸນການຄ້າຕໍ່ລວມຍອດຜະລິດຕະພັນພາຍໃນເພີ່ມຂຶ້ນຢ່າງຕໍ່ເນື່ອງ ຈາກ 0.2% GDP ໃນປີ 2019 ມາເປັນ 6,2% ໃນປີ 2020, ມາເປັນ 9,6% ໃນປີ 2021 ແລະ ເປັນ 10% ໃນປີ 2022. ເຖິງແມ່ນວ່າ ປີ 2022 ສປປ ລາວ ມີດຸນການຄ້າເກີນດຸນ, ແຕ່ມູນຄ່າເກີນດຸນການຄ້າໜ້ອຍລົງ ຫລື ຫລຸດລົງ -13% ເມື່ອທຽບກັບປີຜ່ານມາ. ພ້ອມກັນນັ້ນ, ການຄ້າດ້ານສິນຄ້າທີ່ເກີນດຸນ ຍັງແມ່ນມາຈາກຂະແໜງຊັບພະຍາກອນທຳມະຊາດ ເຊິ່ງເປັນການລົງທຶນຂະ ໜາດໃຫຍ່ຂອງນັກລົງທຶນຕ່າງປະເທດ ແລະ ລາຍຮັບຈາກການສົ່ງອອກສ່ວນຫລາຍບໍ່ໄດ້ນຳເຂົ້າມາໃນປະເທດ ເຊິ່ງເປັນສາເຫດໜຶ່ງທີ່ເຮັດໃຫ້ ສປປ ລາວຍັງພົບຄວາມຫຍຸ້ງຍາກດ້ານການຂາດແຄນເງິນຕາ. ດັ່ງນັ້ນ. ສະພາບເສດຖະກິດ ຂອງ ສປປລາວໃນປີ 2022 ຍັງສືບຕໍ່ມີຄວາມບອບບາງທາງດ້ານເງິນຕາ.

- ດຸນການຄ້າທີ່ບໍ່ລວມການສົ່ງອອກຄືນ

ຖ້າຫາກບໍ່ລວມການສົ່ງອອກຄືນ ຢູ່ໃນມູນຄ່າການສົ່ງອອກທັງໝົດ, ດຸນການຄ້າດ້ານສິນຄ້າ ຂອງ ສປປ ລາວ ແມ່ນຂາດດຸນແຕ່ອາດີດມາເຖິງປະຈຸບັນ ຍົກເວັ້ນ ປີ 2020 ທີ່ບໍ່ມີກິດຈະກຳ ນຳເຂົ້າ ເພື່ອປຸງແຕ່ງ ແລະ ສົ່ງອອກຄືນຫຼາຍ ຍ້ອນການແຜ່ລະບາດຂອງພະຍາດ ໂຄວິດ 19. ໃນໄລຍະ 5 ປີ ຜ່ານມາ, ດຸນການຄ້າດ້ານສິນຄ້າ ບໍ່ລວມການສົ່ງອອກຄືນ ຂາດດຸນຢູ່ໃນລະດັບ 744 ລ້ານໂດລາ ມາເປັນ 817 ລ້ານໂດລາ ແລະ ມາເປັນ 727 ລ້ານໂດລາ ໃນປີ 2022 ເຊິ່ງເພີ່ມຂຶ້ນຈາກ 201 ລ້ານໂດລາ ຈາກປີ 2021.

**ຮູບສະແດງ 6:** ດຸນການຄ້າ ປີ 2018-2022




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

ສຳລັບສະຖິຕິການຄ້າດ້ານບໍລິການເຊິ່ງບໍ່ຈຳແນກຄວາມເປັນເຈົ້າຂອງ ຂອງສິນຄ້ານັ້ນວ່າຕົ້ນທາງແມ່ນຂອງປະເທດໃດ. ອີງຕາມສະຖິຕິດຸນຊຳລະກັບຕ່າງປະເທດ[3] ເຫັນວ່າ ດຸນການຄ້າດ້ານບໍລິການກັບມາສືບຕໍ່ຂາດດຸນເພີ່ມຂຶ້ນເຊິ່ງເລີ່ມເພີ່ມຂຶ້ນຈາກປີ 2019 ທີ່ຢູ່ໃນລະດັບ -67 ລ້ານໂດລາ ມາເປັນ -99 ລ້ານໂດລາ ໃນປີ 2020, ເປັນ -127 ລ້ານໂດລາ ໃນປີ 2021 ແລະ ເປັນ -180 ລ້ານໂດລາໃນປີ 2022. ເຖິງແມ່ນວ່າ ສປປ ລາວ ເລີ່ມມີດຸນການຄ້າດ້ານສິນຄ້າດີຂຶ້ນ ຈາກທີ່ເຄີຍຂາດດຸນມາຍາວນານ, ແຕ່ສຳລັບດຸນບໍລິການແລ້ວ ສປປ ລາວ ຍັງສືບຕໍ່ຂາດດຸນເພີ່ມຂຶ້ນຍ້ອນ ພາກການບໍລິການພາຍໃນຍັງບໍ່ສາມາດດຶງດູດການບໍລິການໄດ້ດີ ແລະ ມີການໄປຊົມໃຊ້ດ້ານການບໍລິການຢູ່ຕ່າງປະເທດຍັງນັບມື້ຫລາຍຂຶ້ນ.

**ຮູບສະແດງ 7:** ການຄ້າດ້ານສິນຄ້າ (ຮູບດ້ານຊ້າຍມື) ແລະ ການຄ້າດ້ານການບໍລິການ (ຮູບດ້ານຂວາມື)




**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປລາວ

## II. ການສົ່ງອອກ

ມູນຄ່າການສົ່ງອອກຂອງ ສປປ ລາວ ແມ່ນໄດ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ປະກອບສ່ວນຢ່າງແຂງແຮງຕໍ່ການຂະຫຍາຍຕົວຂອງເສດຖະກິດ, ເຖິງວ່າໃນປີ 2019-2022 ການສົ່ງອອກຈະປະສົບກັບສະພາບການແຜ່ລະບາດຂອງພະຍາດໂຄວິດ-19, ສົງຄາມການຄ້າສະຫະລັດອາເມລິກາ ກັບຈີນ, ສົງຄາມລັດເຊຍ ແລະ ຢູເຄຣນ ເຮັດໃຫ້ການສົ່ງອອກສິນຄ້າມີບໍ່ສະດວກ, ແຕ່ມູນຄ່າການສົ່ງອອກຂອງ ສປປ ລາວ ຍັງສືບຕໍ່ ແລະ ເພີ່ມຂຶ້ນໃນແຕ່ລະປີ. ໃນປີ 2022 ການສົ່ງອອກສິນຄ້າຂອງ ສປປ ລາວ ມີມູນຄ່າທັງໝົດ 8.421 ລ້ານໂດລາສະຫະລັດທຽບໃສ່ແຜນການໃນປີ 2022 ປະຕິບັດໄດ້ 102% (ມະຕິສະພາ: 8,225 ລ້ານໂດລາສະຫະລັດ), ຖ້າທຽບໃສ່ປີຜ່ານມາເຫັນວ່າເພີ່ມຂຶ້ນໃນນາມ 9,4%. ຖ້າທຽບໃສ່ລວມຍອດຜະລິດຕະພັນພາຍໃນ ແມ່ນກວມເອົາ 56% ຂອງ GDP ແຕ່ຖ້າຫາກພິຈາລະນາການສົ່ງອອກທີ່ບໍ່ລວມການສົ່ງອອກຄືນ, ປີ 2022 ມູນຄ່າການສົ່ງອອກທີ່ບໍ່ລວມການສົ່ງອອກຄືນບັນລຸໄດ້ 6.131,1 ລ້ານໂດລາ ແລະ ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 14%. ລາຍລະອຽດ ໂຄງປະກອບຂອງການສົ່ງອອກ, ປະເທດຄູ່ຄ້າ ແລະ ຊ່ອງທາງການສົ່ງອອກແມ່ນມີດັ່ງນີ້:

---

[3]ດຸນການຊຳລະສະສາງກັບຕ່າງປະເທດ ແມ່ນໄດ້ຈາກການສ້າງບັນຊີດຸນການຊຳລະລະຫວ່າງປະເທດ (BOP) ທີ່ຄາດຄະເນໂດຍ ທະນາຄານແຫ່ງ ສປປລາວ

**ຮູບສະແດງ 8:** ອັດຕາການເປີດປະເທດ ຂອງ ສປປ ລາວ ແລະ ການສົ່ງອອກຄືນ 2018-2022




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

## 1. ໂຄງປະກອບຂອງການສົ່ງອອກ

ອີງຕາມ ລະຫັດສາລະບານສະຖິຕິການຄ້າ ລະດັບ 2 ໂຕເລກ ຫລື ສາລະບານອັດຕາພາສີລະບົບເອກະພາບອາຊຽນ ທີ່ມີການສົ່ງອອກແບ່ງເປັນ 22 ໝວດນັ້ນ ເຫັນວ່າ ໝວດຜະລິດຕະພັນແຮ່ທາດ ແລະ ໄຟຟ້າ ຕາມລະຫັດສາລະບານອັດຕາພາສີເອກະພາບອາຊຽນລະດັບ 8 ຕົວເລກ) ກວມສັດສ່ວນຫຼາຍກວ່າໝູ່ ເຊິ່ງກວມ 37,9% ຂອງການສົ່ງອອກທັງໝົດ ແລະ ສະເລ່ຍ 5 ປີ (2018-2022) ການສົ່ງອອກໝວດດັ່ງກ່າວ ສູງເກືອບ 40% ຂອງການສົ່ງອອກທັງໝົດ. ຮອງລົງມາແມ່ນໝວດຜະລິດຕະພັນຈາກພືດ ກວມ 11% ຂອງການສົ່ງອອກທັງໝົດ, ໝວດເຍື່ອໄມ້ ຫຼື ເສັ້ນໄຍ ແລະ ເຈ້ຍແຂງ ກວມ 10,1%, ໝວດໄຂ່ມຸກທຳມະຊາດ ຫຼື ໄຂ່ມຸກລ້ຽງ (ລວມມີການເຈຍລະໄນເພັດ) ກວມ 9,9%, ໝວດອາຫານປຸງແຕ່ງ ແລະ ເຄື່ອງດື່ມ ກວມ 6,3%. ແຕ່ເມື່ອສັງເກດເປັນລາຍການສິນຄ້າຍ່ອຍ ເຫັນວ່າ 10 ອັນດັບລາຍການສິນຄ້າຕົ້ນຕໍຂອງການສົ່ງອອກປີ 2022 ແມ່ນ ໄຟຟ້າ ກວມ 28% ຂອງການສົ່ງອອກທັງໝົດ, ຮອງລົງມາແມ່ນແຮ່ທາດຄຳ ກວມ 9,6%, ແຮ່ທອງແດງ 4%, ພືດຜັກປະເພດຫົວ 3,9%, ຜະລິດຕະພັນໄມ້ 3,8%, ຜະລິດຕະພັນເຈ້ຍ 3,6%, ເກືອກາລີ 3,3%, ແຮ່ເຫລັກ 2,9%, ເຄື່ອງດື່ມທີ່ບໍ່ແມ່ນເຫລົ້າ 2,7%, ນ້ຳຕານ 2,6% ໝາກໄມ້ 2,5% ແລະ ຢາງພາລາ 2,2%. ເມື່ອປຽບທຽບກັບ 10 ປີຫລັງຄືປີ 2012 ເຫັນວ່າ ການສົ່ງອອກແຮ່ທາດກວມຫລາຍກວ່າ 71% ຂອງການສົ່ງອອກທັງໝົດ, ຮອງລົງແມ່ຈຶ່ງແມ່ນຜະລິດຕະພັນກະສິກຳ ເຊິ່ງສັງເກດເຫັນວ່າ ຕະຫລອດໄລຍະຜ່ານມາການສົ່ງອອກຂອງ ສປປ ລາວ ຍັງແມ່ນສົ່ງອອກ ຊັບພະຍາກອນທຳມະຊາດເປັນຕົ້ນຕໍ (ຕາຕະລາງຊ້ອນທ້າຍ2) . ລາຍລະອຽດການສົ່ງອອກຂອງບາງໝວດຕົ້ນຕໍໃນປີ 2022 ຈະໄດ້ອະທິບາຍດັ່ງຕໍ່ໄປນີ້.

**ຮູບສະແດງ 9**: ສັດສ່ວນການສົ່ງອອກຕາມໝວດສິນຄ້າ 2022




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ຮູບສະແດງ 10:** ລາຍການສິນຄ້າສົ່ງອອກຕົ້ນຕໍ ປີ 2012 ແລະ 2022




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ການສົ່ງອອກໝວດຜະລິດຕະພັນແຮ່ທາດ ແລະ ໄຟຟ້າ:** ການສົ່ງອອກໃນໝວດຜະລິດຕະພັນແຮ່ທາດ ໃນປີ 2022 ມີມູນຄ່າ 3.139,7 ລ້ານໂດລາສະຫະລັດ, ກວມເອົາ 37,9% ຂອງມູນຄ່າການສົ່ງອອກສິນຄ້າທັງໝົດ ທຽບໃສ່ການສົ່ງອອກປີຜ່ານມາເຫັນວ່າໄດ້ເພີ່ມຂຶ້ນ 9%. ໃນນັ້ນ ສິນຄ້າສົ່ງອອກທີ່ພົ້ນເດັ່ນໃນໝວດນີ້ແມ່ນ ການສົ່ງອອກໄຟຟ້າມີມູນຄ່າ 2.357,7 ລ້ານໂດລາສະຫະລັດ ກວມ 73% ຂອງໝວດຜະລິດຕະພັນແຮ່ທາດ ແລະ ກວມ 28% ຂອງການສົ່ງ

ອອກທັງໝົດ, ການສົ່ງອອກໄຟຟ້າທຽບກັບປີຜ່ານມາເພີ່ມຂຶ້ນ 8,7%. ຮອງລົງມາແມ່ນການສົ່ງອອກທອງແດງ ມີມູນຄ່າ 335,9 ລ້ານໂດລາ ກວມ 10,5% ຂອງການສົ່ງໝວດຜະລິດຕະພັນແຮ່ທາດ ແລະ ກວມ 4% ຂອງການສົ່ງອອກທັງໝົດ ແລະ ມີມູນຄ່າເພີ່ມຂຶ້ນ 1,5% ເມື່ອທຽບກັບປີຜ່ານມາ. ການສົ່ງອອກແຮ່ເຫຼັກ ມີມູນຄ່າ 243,9 ລ້ານໂດລາສະຫະລັດ, ກວມ 7,6% ຂອງການສົ່ງອອກຂອງໝວດ ແລະ 2,9% ຂອງການສົ່ງອອກທັງໝົດ ແຕ່ເມື່ອທຽບກັບປີຜ່ານມາການສົ່ງອອກແຮ່ເຫລັກຫລຸດລົງ 0,9%. ການສົ່ງອອກຊີມັງ 125 ລ້ານໂດລາ ກວມ 4% ຂອງການສົ່ງອອກຂອງໝວດ ແລະ ກວມ 1,5% ຂອງການສົ່ງອອກທັງໝົດ ແລະ ທຽບກັບປີຜ່ານມາເພີ່ມຂຶ້ນ 43%. ການສົ່ງອອກຫີນແຮ່ກົ່ວ ມີມູນຄ່າ 21 ລ້ານໂດລາ ກວມ 0,7% ຂອງການສົ່ງອອກໝວດ ແລະ ກວມ 0,3% ຂອງການສົ່ງອອກທັງໝົດ ແລະ ທຽບປີຜ່ານມາເພີ້ມຂຶ້ນ 51%.

**ຮູບສະແດງ 11:** ໂຄງປະກອບການສົ່ງອອກໃນໝວດຜະລິດຕະພັນແຮ່ທາດ




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນແລະ ກົມແຜນການ ແລະ ການຮ່ວມມື, ກະຊວງພະລັງງານ ແລະ ບໍ່ແຮ່, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ໝວດຜະລິດຕະພັນຈາກພືດກະສິກຳ:** ໃນປີ 2022 ສາມາດສົ່ງອອກ ໄດ້ 977,7 ລ້ານໂດລາ ກວມເອົາ 11,6% ຂອງການສົ່ງອອກທັງໝົດ ແລະ ທຽບໃສ່ປີຜ່ານມາເພີ້ມຂຶ້ນ 12%. ການສົ່ງອອກທີ່ພົ້ນເດັ່ນ ແມ່ນມັນຕົ້ນ ມີມູນຄ່າ 332 ລ້ານໂດລາ ເພີ່ມຂຶ້ນ 23% ເມື່ອທຽບກັບປີຜ່ານມາ, ກວມ 34% ຂອງການສົ່ງອອກຂອງໝວດສິນຄ້າຜະລິດຕະພັນຈາກພືດກະສິກຳ ແລະ ກວມ 3,9% ຂອງການສົ່ງອອກທັງໝົດ. ຮອງລົງມາແມ່ນ ໝາກກ້ວຍ ມີມູນຄ່າການສົ່ງອອກ 207 ລ້ານໂດລາ ເພີ່ມຂຶ້ນ 11,5% ເມື່ອທຽບກັບປີຜ່ານມາ, ເຊິ່ງ ກວມ 21,2% ຂອງການສົ່ງອອກຂອງໝວດຜະລິດຕະພັນຈາກພືດ ແລະ ກວມ 2,5% ຂອງການສົ່ງອອກທັງໝົດ. ການສົ່ງອອກກາເຟ ມີມູນຄ່າ 93,5 ລ້ານໂດລາ ເພີ່ມຂຶ້ນ 6,4%, ກວມ 9,6% ຂອງໝວດ ແລະ ກວມ 1,1% ຂອງການສົ່ງອອກທັງໝົດ. ແປ້ງມັນຕົ້ນ ມີມູນຄ່າ 72 ລ້ານໂດລາ ເພີ່ມຂຶ້ນ 98%, ເຊິ່ງກວມ 7,4% ຂອງການສົ່ງອອກໝວດ ແລະ 0,9% ຂອງມູນການສົ່ງອອກທັງໝົດ. ການສົ່ງອອກ ເຂົ້າສານ ມີມູນຄ່າ 31,7 ລ້ານໂດລາ ເພີ່ມຂຶ້ນ 24%, ກວມເອົາ 3,2% ຂອງໝວດ ແລະ ກວມ 0,4% ຂອງການສົ່ງອອກທັງໝົດ. ສັງເກດເຫັນວ່າ ການສົ່ງອອກຜົນຜະລິດກະສິກຳ ມີທ່າອ່ຽງດີຂຶ້ນ ເຊິ່ງເປັນສັນຍານດີໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ໂດຍສຸມໃສ່ຜະລິດພືດທີ່ເປັນທ່າແຮງ ເພື່ອສົ່ງອອກ ແນ່ໃສ່ສ້າງລາຍຮັບ ແລະ ແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ.

**ຮູບສະແດງ 12:** ໂຄງປະກອບການສົ່ງອອກໃນໝວດຜະລິດຕະພັນຈາກພືດ




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນແລະ ກົມແຜນການ ແລະ ການຮ່ວມມື, ກະຊວງພະລັງງານ ແລະ ບໍ່ແຮ່, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ໝວດເຍື່ອໄມ້ ຫຼື ເສັ້ນໄຍ ແລະ ເຈ້ຍແຂງ:** ນັບແຕ່ປີ 2015 ທີ່ລັດຖະບານປະກາດຄຳສັ່ງເລກທີ 15 ວ່າດ້ວຍການຢຸຕິການຂຸດຄົ້ນໄມ້, ການສົ່ງອອກໄມ້ທ່ອນ, ຜະລິດຕະພັນໄມ້ກໍ່ຫຼຸດລົງ. ແຕ່ລັດຖະບານສົ່ງເສີມໄປສູ່ການຜະລິດຈາກປ່າປູກ ແລະ ສົ່ງເສີມການຜະລິດເປັນສິນຄ້າ ເຮັດໃຫ້ການຜະລິດ ຜະລິດຕະພັນຈາກໄມ້ເພື່ອສົ່ງອອກພົ້ນເດັ່ນຂຶ້ນ. ສະແດງອອກ ການສົ່ງອອກເຍື່ອໄມ້ ແລະ ຜະລິດຕະພັນຈາກເຍື່ອໄມ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ ໃນປີ 2022 ສາມາດສົ່ງອອກໄດ້ 852.4 ລ້ານໂດລາ ກວມເອົາ 10,1% ຂອງການສົ່ງອອກທັງໝົດ ແລະ ທຽບກັບປີກາຍເພີ່ມຂຶ້ນ 3.1%. ສິນຄ້າທີ່ສົ່ງອອກພົ້ນເດັ່ນໃນໝວດນີ້ແມ່ນ ແຜນເຫຍື້ອເຈ້ຍລະລາຍ ມີມູນຄ່າການສົ່ງອອກ 322 ລ້ານໂດລາ ເພີ່ມຂຶ້ນ 19% ທຽບໃສ່ປີຜ່ານມາ, ກວມເອົາ 37,8% ຂອງການສົ່ງອອກຂອງໝວດເຍື່ອໄມ້ ຫຼື ເສັ້ນໄຍ ແລະ 3,8% ຂອງມູນຄ່າການສົ່ງອອກທັງໝົດ. ຜະລິດຕະພັນເຈ້ຍ ມີມູນຄ່າການສົ່ງອອກ 489 ລ້ານໂດລາ ຫລຸດລົງ 7% ທຽບໃສ່ປີຜ່ານມາ, ກວມເອົາ 57% ຂອງການສົ່ງອອກຂອງໝວດເຍື່ອໄມ້ ຫຼື ເສັ້ນໄຍ ແລະ 6% ຂອງມູນຄ່າການສົ່ງອອກທັງໝົດ.

**ຮູບສະແດງ 13:** ໂຄງປະກອບການສົ່ງອອກໃນໝວດຜະລິດຕະພັນຈາກໄມ້, ເຫຍື້ອໄມ້/ເຫຍື້ອໄມ້ທີ່ໄດ້ຈາກວັດຖຸເສັ້ນໄຍ (%)




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ, ກົມແຜນການ ແລະ ການຮ່ວມມື, ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ໝວດອາຫານປຸງແຕ່ງ ແລະ ເຄື່ອງດື່ມ:** ໝາຍເຖິງຜະລິດຕະພັນ ທີ່ປະກອບດ້ວຍອາຫານປຸງແຕ່ງ, ເຄື່ອງດື່ມ, ເຫລົ້າ , ນໍ້າສົ້ມ, ຢາສູບ. ການສົ່ງອອກສິນຄ້າທີ່ນອນໃນໝວດອາຫານປຸງແຕ່ງ ແລະ ເຄື່ອງດື່ມ ມີມູນຄ່າ 531 ລ້ານໂດລາ ກວມ 6% ຂອງການສົ່ງອອກທັງໝົດ ແລະ ເພີ່ມຂຶ້ນ 37% ເມື່ອທຽບກັບປີຜ່ານມາ. ສິນຄ້າພົ້ນເດັ່ນໃນໝວດດັ່ງກ່າວ ແມ່ນ ເຄື່ອງດື່ມທີ່ບໍ່ມີທາດເຫລົ້າເປັນຕົ້ນແມ່ນກະທິງແດງ ແລະ ເຄື່ອງດື່ມຊູກໍາລັງ ມີມູນຄ່າ 222 ລ້ານໂດລາ, ກວມ 42% ຂອງການສົ່ງອອກໝວດອາຫານປຸງແຕ່ງ ແລະ ກວມ 2,7% ຂອງການສົ່ງອອກທັງໝົດ. ຮອງລົງມາແມ່ນນໍ້າຕານ ຊາຍ ມີມູນຄ່າການສົ່ງອອກ 217 ລ້ານໂດລາ ເພີ່ມຂຶ້ນ 24% ເມື່ອທຽບກັບປີຜ່ານມາ, ກວມ 7% ຂອງການສົ່ງອອກ ໝວດອາຫານປຸງແຕ່ງ ແລະ ເຄື່ອງດື່ມ ແລະ ກວມ 2,6% ຂອງການສົ່ງອອກທັງໝົດ. ການສົ່ງອອກ ຢາສູບ ມີມູນຄ່າ ການສົ່ງອອກ 27 ລ້ານໂດລາ ເພີ່ມຂຶ້ນ 44% ເມື່ອທຽບກັບປີຜ່ານມາ, ກວມ 5% ຂອງການສົ່ງອອກໝວດອາຫານປຸງ ແຕ່ງ ແລະ ເຄື່ອງດື່ມ ແລະ ກວມ 0,3% ຂອງການສົ່ງອອກທັງໝົດ.

**ຮູບສະແດງ 14:** ໂຄງປະກອບການສົ່ງອອກໃນໝວດຜະລິດຕະພັນໝວດອາຫານປຸງແຕ່ງ ແລະ ເຄື່ອງດື່ມ




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນແລະ ກົມແຜນການ ແລະ ການຮ່ວມມື, ກະຊວງພະລັງງານ ແລະ ບໍ່ແຮ່, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

## 2. ການສົ່ງອອກສິນຄ້າຄືນໃໝ່

ການສົ່ງອອກສິນຄ້າຄືນໃນ ປີ 2022 ຂອງ ສປປ ລາວ ມີມູນຄ່າທັງໝົດ 2,289.9 ລ້ານໂດລາສະຫະລັດ, ກວມເອົາ 27% ຂອງການສົ່ງອອກທັງໝົດ. ໃນຮູບສະແດງຂ້າງລຸ່ມ ໄດ້ສະແດງໃຫ້ເຫັນວ່າ ຖ້າສົມທຽບໃສ່ຫລາຍປີຜ່ານມາເຫັນວ່າ ການສົ່ງອອກສິນຄ້າຄືນມີທ່າອ່ຽງເພີ້ມຢ່າງຕໍ່ເນື່ອງຄືຈາກ 12% ຂອງການສົ່ງອອກທັງໝົດໃນປີ 2018 ມາເປັນ 14% ໃນປີ 2019 ແລະ ເປັນ 30% ໃນປີ 2021 ແລະ ເປັນ 27% ໃນປີ 2022. ສິນຄ້າທີ່ສົ່ງອອກຄືນໃໝ່ສ່ວນຫລາຍ ແມ່ນຜະລິດຕະພັນເຊັ່ນ: ເຄື່ອງດື່ມທີ່ບໍ່ທາດເຫຼົ້າ (ກະທິງແດງ, ປະເພດນົມ ແລະ ນໍ້າໝາກໄມ້), ນໍ້າຕານ, ສັດ, ເຄື່ອງໂທລະສັບ ແລະ ສິນຄ້າບໍລິໂພກ, ອຸປະໂພກອື່ນໆ. ການສົ່ງອອກຄືນໃໝ່ ສ່ວນຫລາຍແມ່ນສົ່ງໄປ ສປ. ຈີນ ກວມເອົາ 30.4% ມູນຄ່າການສົ່ງອອກຄືນ, ຮອງລົງມາແມ່ນ ຫວຽດນາມ 26.7% ແລະ ໄທ ກວມເອົາ 12.6%.

**ຮູບສະແດງ 15:** ສັດສ່ວນ ການສົ່ງອອກຄືນໃໝ່ ແລະ ການສົ່ງອອກທີ່ບໍ່ລວມການສົ່ງອອກຄືນໃໝ່ (ຮູບດ້ານຊ້າຍ); ສັດສ່ວນຕະຫລາດສົ່ງອອກຄືນໃໝ່ (ຮູບດ້ານຂວາ)




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

## 3. ປະເທດຄູ່ຄ້າໃນການສົ່ງອອກ

ສປປ ລາວ ກັບບັນດາປະເທດຄູ່ຄ້າທັງໝົດປະມານ 127 ປະເທດ ໃນໂລກ, ແຕ່ເຖິງຢ່າງໃດກໍ່ຕາມ, ການສົ່ງອອກສ່ວນຫລາຍແມ່ນໄປປະເທດອ້ອມຂ້າງ ແລະ ຂົງເຂດ ເປັນສ່ວນໃຫຍ່ ໂດຍສະເພາະໃນກອບຂອງການຮ່ວມມື ASEAN, ASEAN+3, +5. ໃນປີ 2022 ເຫັນວ່າ 56,2% ຂອງມູນຄ່າການສົ່ງອອກ ແມ່ນໄປປະເທດໃນຂົງເຂດອາຊຽນ, ໃນນັ້ນພົ້ນເດັ່ນແມ່ນ ສົ່ງອອກໄປ ປະເທດໄທ ແລະ ຫວຽດນາມ ກວມເອົາ 34.1% ແລະ 22.8% ຕາມລຳດັບ. ສ່ວນຂົງເຂດອື່ນ ພົ້ນເດັ່ນແມ່ນ ສົ່ງອອກໄປ ສປ ຈີນ ກວມເອົາ 25.6% ຂອງມູນຄ່າການສົ່ງອອກທັງໝົດ, ສົ່ງອອກໄປປະເທດອົດສະຕາລີ ກວມ 4.1%. ເມື່ອທຽບກັບປີຜ່ານມາ ມູນຄ່າການສົ່ງອອກໄປໄທ ເພີ່ມຂຶ້ນ 6%, ຫວຽດນາມເພີ່ມຂຶ້ນ 11%, ສົ່ງອອກໄປຈີນເພີ່ມຂຶ້ນ 8.8%, ອົດສະຕາລີ 4.1%. ສຳລັບປະເທດລັດເຊຍໃນປີທີ່ເກີດສົງຄາມລັດເຊຍ ແລະ ຢູເຄຣນເຫັນໄດ້ວ່າການສົ່ງອອກຂອງ ສປປ ລາວ ໄປ ລັດເຊຍ ແມ່ນໄດ້ຫຼຸດລົງເຖິງ -92.8%.

ໃນປີ 2022, ສິນຄ້າຕົ້ນຕໍທີ່ສົ່ງອອກໄປປະເທດໄທ ແມ່ນໄຟຟ້າກວມ 69% ຂອງການສົ່ງອອກໄປໄທທັງໝົດ, ຮອງລົງມາແມ່ນ ມັນຕົ້ນ ກວມ 10% ຂອງການສົ່ງອອກທັງໝົດ, ຊີມັງ ກວມ 4%, ອຸປະກອນການສືສານ 3%. ສຳລັບສິນຄ້າຕົ້ນຕໍສົ່ງອອກຈີນແມ່ນ ຜະລິດຕະພັນແຮ່ (ທອງ, ຄຳ, ເຫັລກ) ກວມ 14%, ແຜ່ນເຫຍື້ອໄມ້ ແລະ ເຈ້ຍເທດສະໄລເນີ ກວມ 25% ຂອງການສົ່ງອອກໄປຈີນທັງໝົດ, , ເກືອກາລີ 10%, ໝາກກ້ວຍ 9%. ສ່ວນສິນຄ້າຕົ້ນຕໍທີ່ສົ່ງໄປຫວຽດນາມແມ່ນ ຢາງພາລາ ກວມ16% ຂອງການສົ່ງອອກໄປຫວຽດນາມທັງໝົດ, ນ້ຳຕານ ກວມ 15%, ໄຟຟ້າ 9%, ແຮ່ເຫລັກ 8% ແລະ ສັດລ້ຽງ 7%.

ພ້ອມກັນນັ້ນ ຈາກຮູບສະແດງຂ້າງລຸ່ມ ສັງເກດເຫັນວ່າ ທ່າອ່ຽງຂອງຕະຫລາດສົ່ງອອກ ຂອງ ສປປ ລາວ ຍັງບໍ່ທັນມີການປ່ຽນແປງຫລາຍ ດັ່ງຮູບສະແດງຂ້າງລຸ່ມ ຕະຫລາດສົ່ງອອກຍັງອີງໃສ່ພຽງປະເທດເພື່ອນບ້ານເປັນຫລັກ.

**ຮູບສະແດງ 16:** ສັດສ່ວນການສົ່ງອອກທຽບໃສ່ 5 ປີຜ່ານມາ (2012 ແລະ 2022)




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ຮູບສະແດງ 17:** ບັນດາປະເທດທີ່ນຳເຂົ້າສິນຄ້າຈາກ ສປປລາວ ຫລື ສປປ ລາວ ສົ່ງອອກໄປປະເທດຕ່າງໆໃນປີ 2022




**ແຫຼ່ງຂໍ້ມູນ:** TRADE MAP, 2023

## 4. ຊ່ອງທາງຂອງການສົ່ງອອກ

ມູນຄ່າການສົ່ງອອກສິນຄ້າ ຂອງ ສປປ ລາວ ແມ່ນຜ່ານຫລາຍຮູບແບບ ພົ້ນເດັ່ນແມ່ນການສົ່ງອອກຜ່ານທາງບົກ ເຊິ່ງອີງຕາມບົດລາຍງານ ສະຖິຕິຂະແໜງການ, ກະຊວງໂຍທາ ແລະ ຂົນສົ່ງ ປີ 2022 ເຫັນວ່າປະຈຸບັນ ສປປ ລາວ ມີດ່ານຊາຍແດນ ກັບປະເທດທັງໝົດ 5 ປະເທດ ຈຳນວນທັງໝົດ 109 ດ່ານ ໃນນັ້ນ ສາກົນ 18, ດ່ານ ທ້ອງຖິ່ນ 32 ດ່ານ ແລະ ດ່ານປະເພນີ 59 ດ່ານ. ປີ 2022 ມູນຄ່າການສົ່ງອອກສິນຄ້າ (ບໍ່ລວມໄຟຟ້າ) ຜ່ານນທາງບົກ ກວມເອົາ 65% ຂອງການສົ່ງອອກທັງໝົດ, ເຊິ່ງສະແດງໃຫ້ເຫັນການສົ່ງອອກທາງບົກເປັນທ່າແຮງຂອງ ສປປ ລາວ ທີ່ລັດຖະບານໄດ້ສ້າງແຜນງານການເຊື່ອມໂຍ່ງທາງການຄ້າ ກັບບັນດາປະເທດ ແລະ ພາກພື້ນ ແລະ ຄາດວ່າໃນຕໍ່ໜ້າການສົ່ງອອກທາງບົກຈະຍິ່ງເພີ່ມສູງຂຶ້ນ. ນອກນັ້ນກໍ່ມີການສົ່ງອອກໂດຍຜ່ານທາງອາກາດ ກວມເອົາ 8.1% ຂອງການສົ່ງອອກທັງໝົດ, ໃນປີ 2022 ສປປ ລາວໄດ້ເປີດການຂົນສົ່ງທາງລົດໄຟ ສປ. ຈີນ ຫາ ສປປ ລາວ ໄດ້ກວມເອົາ 2.3% ຂອງການສົ່ງອອກ (ຮູບສະແດງ) ແລະ ທາງນ້ຳ 0,59%. ສ່ວນການສົ່ງອອກໄຟຟ້າ ແມ່ນການສົ່ງອອກໂດຍໃຊ້ສາຍສົ່ງໄຟຟ້າ.

**ຮູບສະແດງ 18:** ອັດຕາສ່ວນການສົ່ງອອກທັງໝົດແບ່ງຕາມຮູບແບບວິທີຂອງການສົ່ງອອກ 2012 ແລະ 2022




**ແຫຼ່ງຂໍ້ມູນ**: ກົມພາສີ, ກະຊວງການເງິນ ແລະ ກະຊວງພະລັງງານ ແລະບໍ່ແຮ່, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

ສະຫລຸບແລ້ວ, ທາງດ້ານມູນຄ່າແລ້ວການສົ່ງອອກຂອງ ສປປ ລາວ ເພີ່ມຂຶ້ນ ແລະ ຊ່ອງທາງການສົ່ງອອກໄດ້ຮັບການພັດທະນາ ໂດຍມີລົດໄຟມາຮອງຮັບການສົ່ງອອກ ທີ່ສາມາດສົ່ງສິນຄ້າເຖິງປາຍທາງໄດ້ວ່ອງໄວຂຶ້ນ ແລະ ມີຕົ້ນທຶນທີ່ຕໍ່າລົງ. ແຕ່ເຖິງຢ່າງໃດກໍ່ຕາມ, ເຖິງແມ່ນວ່າການສົ່ງອອກປີ 2022 ຈະເພີ່ມຂຶ້ນ, ແຕ່ສ່ວນໜຶ່ງແມ່ນມາຈາກການເພີ່ມຂຶ້ນຂອງເງິນເຟີ້. ດັ່ງນັ້ນ, ການສົ່ງອອກທີ່ແທ້ຈິງ ຫລື ປະລິມານການສົ່ງອອກໂດຍລວມຂອງ ສປປ ລາວ ອາດບໍ່ໄດ້ເພີ່ມຂຶ້ນຫລາຍ. ສະນັ້ນ, ການຕິດຕາມ ແລະ ການປະເມີນການສົ່ງອອກທີ່ແທ້ຈິງ ຫລື ເປັນການສົ່ງອອກດ້ານປະລິມານຈຶ່ງມີຄວາມຈໍາເປັນ ເພື່ອສາມາດເບິ່ງໄດ້ເຖິງຄວາມເປັນຈິງຂອງການສົ່ງອອກ. ພ້ອມກັນນັ້ນ, ທາງດ້ານຜະລິດຕະພັນເຫັນວ່າ ການສົ່ງອອກສິນຄ້າຂອງ ສປປ ລາວ ຍັງບໍ່ທັນມີຄວາມຫລາກຫລາຍ, ສິນຄ້າສົ່ງອອກຕົ້ນຕໍ ຍັງເປັນສິນຄ້າທີ່ມາຈາກຊັບສິນທໍາມະຊາດເປັນຕົ້ນແມ່ນໄຟຟ້າ ແລະ ບໍ່ແຮ່ ທີ່ກວມສັດສ່ວນຫລາຍ, ສ່ວນສິນຄ້າອຸດສາຫະກໍາປຸງແຕ່ງເປັນຕົ້ນແມ່ນຜະລິດຕະພັນປຸງແຕ່ງກະສິກໍາ ທີ່ ສປປ ລາວ ມີທ່າແຮງ (ອີງໃສ່ຈໍານວນແຮງງານສ່ວນໃຫຍ່ຊຶ່ງເຄີຍຢູ່ຂົງເຂດກະສິກໍາ, ພື້ນທີ່ກະສິກໍາ) ຍັງບໍ່ທັນໄດ້ຮັບການພັດທະນາເປັນສິນຄ້າສົ່ງອອກທີ່ເຂັ້ມແຂງ ເຊິ່ງສ່ວນໃຫຍ່ການສົ່ງອອກສິນຄ້າກະສິກໍາຍັງເປັນສິນຄ້າວັດຖຸດິບທີ່ສົ່ງອອກເພື່ອປຸງແຕ່ງຢູ່ຕ່າງປະເທດ. ພ້ອມກັນນັ້ນ, ຕະຫລາດສົ່ງອອກກໍ່ຍັງກະຈຸກຕົວຢູ່ປະເທດເພື່ອນບ້ານເປັນສ່ວນໃຫຍ່ ເຊິ່ງສະແດງໃຫ້ເຫັນວ່າ ການຂະຫຍາຍຕະຫລາດຍັງມີຄວາມຈໍາກັດ.

## III. ການນໍາເຂົ້າ

ການນນໍາເຂົ້າສິນຄ້າ ຂອງ ສປປ ລາວໃນ ປີ 2022 ມີມູນຄ່າ 6.858,5 ລ້ານໂດລາສະຫະລັດ, ທຽບໃສ່ແຜນການໃນປີປະຕິບັດໄດ້ 100.2% (ມະຕິສະພາ: 7,100 ລ້ານໂດລາສະຫະລັດ), ທຽບໃສ່ປີຜ່ານມາໄດ້ເພີ້ມຂຶ້ນ 16%. ຖ້າທຽບໃສ່ລວມຍອດຜະລິດຕະພັນພາຍໃນ ແມ່ນກວມເອົາ 45.6% ຂອງ GDP. ການນໍາເຂົ້າສິນຄ້າຂອງ ສປປ ລາວ ໄດ້ມີການຂະຫຍາຍຕົວເພີ່ມຂຶ້ນ ຄຽງຄູ່ກັບການຂະຫຍາຍຕົວຂອງເສດຖະກິດ. ການນໍາເຂົ້າສິນຄ້າ ຂອງ ສປປ ລາວ ແມ່ນມີຫລາກຫລາຍຜະລິດຕະພັນ ໃນນັ້ນ ຕົ້ນຕໍແມ່ນນໍາເຂົ້າສິນຄ້າປະເພດວັດຖຸດິບ, ເຄື່ອງກົນຈັກເພື່ອມາຮັບໃຊ້ໃນການຜະລິດ ແລະ ເຄື່ອງອຸປະໂພກ-ບໍລິໂພກ ເຊິ່ງລາຍລະອຽດມີດັ່ງນີ້:

**ຮູບສະແດງ 19:** ການນຳເຂົ້າສິນຄ້າ ຂອງ ສປປ ລາວໃນປີ 2018-2022




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ ແລະ ກະຊວງພະລັງງານ ແລະບໍ່ແຮ່, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

## 1. ໂຄງປະກອບຂອງການນຳເຂົ້າ

ການນຳເຂົ້າສິນຄ້າ ຖ້າແບ່ງຕາມລະຫັດສາລະບານສະຖິຕິການຄ້າ ທີ່ມີທັງໝົດ 22 ໝວດນັ້ນ ເຫັນວ່າການນຳເຂົ້າສິນຄ້າໝວດຜະລິດພັນແຮ່ທາດກວມຫລາຍກວ່າໝູ່ ເຊິ່ງມີມູນຄ່າ 1.409,7 ລ້ານໂດລາ ກວມ 20,6% ຂອງການນຳເຂົ້າທັງໝົດ, ຮອງລົງມາແມ່ນ ໝວດ ເຄື່ອງຈັກ ແລະ ອຸປະກອນໄຟຟ້າ ມີມູນຄ່າ 1.186,7 ລ້ານໂດລາ ກວມ 17,3% ຂອງການນຳເຂົ້າທັງໝົດ, ໝວດອາຫານ ແລະ ເຄື່ອງດື່ມ ມີມູນຄ່າ 728,0 ລ້ານໂດລາ ກວມ 10,6%, ໝວດຍານພາຫະນະ ມີມູນຄ່າ 609,3 ລ້ານໂດລາ ກວມ 8,9% ແລະ ໝວດຜະລິດຕະພັນອຸດສາຫະກຳເຄມີ ມີມູນຄ່າ 499,4 ລ້ານໂດລາ ກວມ 7,3% ຂອງການນຳເຂົ້າທັງໝົດ. ສະເລ່ຍແລ້ວ ໃນ 5 ປີຜ່ານມາ, ໝວດທີ່ນຳເຂົ້າກວມຫລາຍກວ່າໝູ່ແມ່ນ ໝວດເຄື່ອງຈັກ ແລະ ໄຟຟ້າ, ຮອງລົງມາແມ່ນ ໝວດຜະລິດຕະພັນແຮ່, ໝວດຍານພາຫະນະ, ໝວດໂລຫະ ແລະ ໝວດອາຫານ ແລະເຄື່ອງດື່ມ. ຖ້າເບິ່ງ 10 ລາຍການສິນຄ້ານຳເຂົ້າຕົ້ນຕໍແມ່ນ ນ້ຳມັນກະຊວນ ກວມ 14% ຂອງການນຳເຂົ້າທັງໝົດ, ເຫຍື້ອເຈ້ຍ 4,3%, ຄຳແທ່ງ 4%, ນ້ຳມັນແອັດຊັ່ງ 3,5%, ນ້ຳຕານ 3,2%, ລົດກະບະໂຕໂຍຕ້າ 2%, ອຸປະກອນຄອມພິວເຕີ 2%, ສາຍໄຟຟ້າ 1,5%, ງົວຄວາຍ 1,5%, ເຫຍື້ອໄມ້ອີກ 1,4%. ເມື່ອທຽບການນຳເຂົ້າປະຈຸບັນໃສ່ 10 ປີຫລັງ (2012) ເຫັນວ່າ ການນຳເຂົ້າຕົ້ນຕໍກໍ່ຍັງແມ່ນການນຳເຂົ້ານ້ຳມັນ, ວັດຖຸດິບ ແລະ ພາຫະນະເປັນຕົ້ນຕໍ (ຕາຕະລາງຊ້ອນທ້າຍ4).

**ຮູບສະແດງ 20:** 10 ລາຍການສິນຄ້ານຳເຂົ້າຕົ້ນຕໍ ໃນປີ 2012 ແລະ 2022 (%)




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ ແລະ ກະຊວງພະລັງງານ ແລະບໍ່ແຮ່, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ຮູບສະແດງ 21:** ໂຄງປະກອບຂອງການນຳເຂົ້າ ແບ່ງຕາມຜະລິດຕະພັນຕົ້ນຕໍ ປີ 2018-2022 (%)




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ ແລະ ກະຊວງພະລັງງານ ແລະບໍ່ແຮ່, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ໝວດຜະລິດຕະພັນແຮ່ ແລະ ໄຟຟ້າ**:ໃນປີ 2022 ສປປ ລາວ ນຳເຂົ້າຜະລິດຈະພັນແຮ່ທາດ ແລະ ໄຟຟ້າ ຫລາຍສິນຄວນ, ມີມູນຄ່າ 1,409.7 ລ້ານໂດລາສະຫະລັດກວມເອົາ 21% ຂອງການນຳເຂົ້າທັງໝົດ ທຽບໃສ່ປີຜ່ານມາເພີ້ມຂຶ້ນ 58%. ໃນໝວດນີ້ສິນຄ້ານຳເຂົ້າທີ່ຕົ້ນຕໍແມ່ນ ແມ່ນນ້ຳມັນກາຊວນ ມີມູນຄ່າ 1.025 ລ້ານໂດລາ ກວມ 73% ຂອງການນຳເຂົ້າໃນໝວດຜະລິດຕະພັນແຮ່ ແລະ ກວມ 15% ຂອງການນຳເຂົ້າທັງໝົດ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 99%. ນ້ຳມັນແອັດຊັງ ມີມູນຄ່າ 239 ລ້ານໂດລາ ກວມ 17% ຂອງການນຳເຂົ້າໃນໝວດຜະລິດຕະພັນແຮ່ ແລະ ກວມ 4% ຂອງການນຳເຂົ້າທັງໝົດ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 73%. ໄຟຟ້າ ມີມູນຄ່າ 40 ລ້ານໂດລາ ກວມ 3% ຂອງການນຳເຂົ້າໃນໝວດຜະລິດຕະພັນແຮ່ ແລະ ກວມ 0,6% ຂອງການນຳເຂົ້າທັງໝົດ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 54%. ນ້ຳມັນເຄື່ອງ ມີມູນຄ່າ 20 ລ້ານໂດລາ ກວມ 1,4 % ຂອງການນຳເຂົ້າໃນໝວດຜະລິດຕະພັນແຮ່ ແລະ ກວມ 0,3% ຂອງການນຳເຂົ້າທັງໝົດ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 44%.

**ຮູບສະແດງ 22:** ໂຄງປະກອບການນຳເຂົ້າໃນໝວດຜະລິດຕະພັນໝວດຜະລິດຕະພັນແຮ່ທາດ.




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ ແລະ ກະຊວງພະລັງງານ ແລະບໍ່ແຮ່, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ໝວດເຄື່ອງຈັກ ແລະ ອຸປະກອນໄຟຟ້າ**: ໃນປີ 2022 ການນຳເຂົ້າຜະລິດຕະພັນນີ້ ມີມູນຄ່າ 1.187 ລ້ານໂດລາ ກວມ 17% ຂອງການນຳເຂົ້າທັງໝົດ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 19%. ການນຳເຂົ້າສ່ວນຫລາຍແມ່ນສິນຄ້ານຳເຂົ້າແມ່ນ ອຸປະກອນເຄື່ອງຄອມພິວເຕີ ມີມູນຄ່າ 118 ລ້ານໂດລາ ກວມ 10% ຂອງການນຳເຂົ້າໃນໝວດເຄື່ອງຈັກ ແລະ ອຸປະກອນໄຟຟ້າ ແລະ ກວມ 2% ຂອງການນຳເຂົ້າທັງໝົດ. ສາຍໄຟຟ້າ ມີມູນຄ່າ 102 ລ້ານໂດລາ ກວມ 9% ຂອງການນຳເຂົ້າໃນໝວດເຄື່ອງຈັກ ແລະ ອຸປະກອນໄຟຟ້າ ແລະ ກວມ 1,5% ຂອງການນຳເຂົ້າທັງໝົດ ແລະ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 8%, ສິ້ນສ່ວນອຸປະກອນໂທລະສັບ ມີມູນຄ່າ 86 ລ້ານໂດລາ ກວມ 7% ຂອງການນຳເຂົ້າໃນໝວດເຄື່ອງຈັກ ແລະ ອຸປະກອນໄຟຟ້າ ແລະ ກວມ 1% ຂອງການນຳເຂົ້າທັງໝົດ ແລະ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 17%. ເຄື່ອງຈັກເຈາະ ແລະ ຂຸດດິນ ມີມູນຄ່າ 40 ລ້ານໂດລາ ກວມ 3% ຂອງການນຳເຂົ້າໃນໝວດເຄື່ອງຈັກ ແລະ ອຸປະກອນໄຟຟ້າ ແລະ ກວມ 0,6% ຂອງການນຳເຂົ້າທັງໝົດ ແລະ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 59%. ສິ້ນສ່ວນອຸປະກອນເຄື່ອງຈັກ ມີມູນຄ່າ 39 ລ້ານໂດລາ ກວມ 3% ຂອງການນຳເຂົ້າໃນໝວດເຄື່ອງຈັກ ແລະ ອຸປະກອນໄຟຟ້າ ແລະ ກວມ 0,6% ຂອງການນຳເຂົ້າທັງໝົດ ແລະ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 27%.

**ຮູບສະແດງ 23:** ໂຄງປະກອບການນຳເຂົ້າໃນໝວດເຄື່ອງຈັກ ແລະ ອຸປະກອນໄຟຟ້າ




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ໝວດຜະລິດຕະພັນອາຫານ ແລະ ເຄື່ອງດື່ມ**: ການນຳເຂົ້າຜະລິດຕະພັນດັ່ງກ່າວ ໃນປີ 2022 ມີມູນຄ່າທັງໝມີມູນຄ່າ 728 ລ້ານໂດລາ ກວມ 11% ຂອງການນຳເຂົ້າທັງໝົດ, ທຽບໃສ່ປີ ຜ່ານມາເພີ່ມຂຶ້ນ 38%. ພົ້ນເດັ່ນ ແມ່ນການນຳເຂົ້າ ນ້ຳຕານ ມີມູນຄ່າ 220 ລ້ານໂດລາ, ກວມ 30% ຂອງໝວດຜະລິດຕະພັນອາຫານ ແລະ ເຄື່ອງດື່ມ, ກວມ 3% ຂອງການນຳເຂົ້າທັງໝົດ ແລະ ທຽບໃສ່ປີຜ່ານມາເພີ່ມຂຶ້ນຫລາຍກວ່າ 300%. ອາຫານສັດ ມີມູນຄ່າ 65 ລ້ານໂດລາ, ກວມ 9% ຂອງໝວດຜະລິດຕະພັນອາຫານ ແລະ ເຄື່ອງດື່ມ, ກວມ 1% ຂອງການນຳເຂົ້າທັງໝົດ ແລະ ທຽບໃສ່ປີຜ່ານມາຫລຸດລົງ 8%, ເຫລົ້າ ມີມູນຄ່າ 24 ລ້ານ ລ້ານໂດລາ, ກວມ 3% ຂອງໝວດຜະລິດຕະພັນອາຫານ ແລະ ເຄື່ອງດື່ມ, ກວມ 0,3% ຂອງການນຳເຂົ້າທັງໝົດ ແລະ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 57%. ພືດຜັກ ມີມູນຄ່າ 22 ລ້ານໂດລາ, ກວມ 3% ຂອງໝວດຜະລິດຕະພັນອາຫານ ແລະ ເຄື່ອງດື່ມ, ກວມ 0,3% ຂອງການນຳເຂົ້າທັງໝົດ ແລະ ທຽບໃສ່ປີຜ່ານມາເພີ່ມຂຶ້ນຫລາຍກວ່າ 100%. ຢາສູບ ມີມູນຄ່າ 22 ລ້ານໂດລາ, ກວມ 3% ຂອງໝວດຜະລິດຕະພັນອາຫານ ແລະ ເຄື່ອງດື່ມ, ກວມ 0,3% ຂອງການນຳເຂົ້າທັງໝົດ ແລະ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 2%.

**ຮູບສະແດງ 24:** ໂຄງປະກອບການສົ່ງອອກໃນໝວດຜະລິດຕະພັນອາຫານ ແລະ ເຄື່ອງດື່ມ




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ໝວດຍານພາຫະນະທາງບົກ, ອາກາດ, ທາງນ້ຳ**: ການນຳເຂົ້າ ໝວດຍານພາຫະນະ ມີມູນຄ່າ 609 ລ້ານໂດລາ ກວມ 9% ຂອງການນຳເຂົ້າທັງໝົດ ທຽບກັບປີຜ່ານມາຫລຸດລົງ 10%. ໃນນັ້ນ ນຳເຂົ້າ ລົດກະບະ ມີມູນຄ່າ 140 ລ້ານໂດລາ ກວມ 23% ຂອງການນຳເຂົ້າໝວດພາຫະນະ ແລະ ກວມ 2% ຂອງການນຳເຂົ້າທັງໝົດ ແລະ ທຽບປີຜ່ານມາຫລຸດລົງ 5%. ລົດຈິບຍີ່ຫໍ້ໂຕໂຍຕ່າ, ອີຊູຊຸ ມີມູນຄ່າ 87 ລ້ານໂດລາ ກວມ 14% ຂອງການນຳເຂົ້າໝວດພາຫະນະ ແລະ ກວມ 1,3% ຂອງການນຳເຂົ້າທັງໝົດ ແລະ ທຽບປີຜ່ານມາເພີ່ມຂຶ້ນ 9%. ຫົວລາກລົດ 10 ລໍ້ ມີມູນຄ່າ 45 ລ້ານໂດລາ ກວມ 7% ຂອງໝວດສິນຄ້າ ແລະ 1% ຂອງການນຳເຂົ້າທັງໝົດ ທຽບປີຜ່ານມາຫລຸດລົງ 22%. ລົດບັນທຸກ 6 ຫາ 10 ລໍ້ ມີມູນຄ່າ 37 ລ້ານໂດລາ ກວມ 6% ຂອງການນຳເຂົ້າໝວດພາຫະນະ ແລະ ກວມ 0,5% ຂອງການນຳເຂົ້າທັງໝົດ ແລະ ທຽບປີຜ່ານມາເພີ່ມຂຶ້ນ 67%. ລົດເກັງ ມີມູນຄ່າ 31 ລ້ານໂດລາ ກວມ 5% ຂອງການນຳເຂົ້າໝວດພາຫະນະ ແລະ ກວມ 0,5% ຂອງການນຳເຂົ້າທັງໝົດ ແລະ ທຽບປີຜ່ານມາຫລຸດລົງ 14%. ພ້ອມກັນນັ້ນ, ບາງສິນຄ້າຢູ່ໃນໝວດດັ່ງກ່າວກໍ່ຍັງເພີ່ມຂຶ້ນຫລາຍເຊັ່ນ ລົດໄຟຟ້າ ເພີ່ມຂຶ້ນ ຫລາຍເທົ່າໂຕ (ຫລາຍກວ່າ 1000%) ແລະ ລົດໄຖນາ ເພີ່ມຂຶ້ນຫລາຍກວ່າ 100% ເມື່ອທຽບກັບປີຜ່ານມາ.

**ຮູບສະແດງ 25:** ໂຄງປະກອບການນຳເຂົ້າໃນໝວດພາຫະນະທາງບົກ, ທາງນ້ຳ ແລະ ທາງອາກາດ




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ໝວດຜະລິດຕະພັນອຸດສາຫະກຳເຄມີ**: ໝວດຜະລິດຕະພັນອຸດສາຫະກຳເຄມີ ມີມູນຄ່າ 499 ລ້ານໂດລາ ກວມ 7% ຂອງການນຳເຂົ້າທັງໝົດໝວດ ແລະ ເພີ່ມຂຶ້ນ 17% ເມື່ອທຽບກັບປີຜ່ານມາ. ສິນຄ້ານຳເຂົ້າຕົ້ນຕໍຂອງໝວດນີ້ແມ່ນ ປຸຍວິທະຍາສາດ ມີມູນຄ່າ 120 ລ້ານໂດລາ, ກວມ 24% ຂອງໝວດອຸດສາຫະກຳເຄມີ, ກວມ 2% ຂອງການນຳເຂົ້າ ທັງໝົດ ແລະ ເພີ່ມຂຶ້ນຫລາຍກວ່າ 100% ເມື່ອທຽບກັບປີຜ່ານມາ. ນ້ຳກົດໃສ່ໝໍ້ໄຟ ມີມູນຄ່າ 38 ລ້ານໂດລາ, ກວມ 8% ຂອງໝວດອຸດສາຫະກຳເຄມີ, ກວມ 0,6% ຂອງການນຳເຂົ້າທັງໝົດ ແລະ ເພີ່ມຂຶ້ນ 100% ເມື່ອທຽບກັບ ປີຜ່ານມາ. ຢາວັກຊີນ ມີມູນຄ່າ 31 ລ້ານໂດລາ, ກວມ 6% ຂອງໝວດອຸດສາຫະກຳເຄມີ, ກວມ 0,4% ຂອງການນຳ ເຂົ້າທັງໝົດ ແລະ ເພີ່ມຂຶ້ນ 34% ເມື່ອທຽບກັບປີຜ່ານມາ.

**ຮູບສະແດງ 26:** ໂຄງປະກອບການນຳເຂົ້າໃນໝວດອຸດສາຫະກຳເຄມີ.




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

## 2. ປະເທດຄູ່ຄ້າໃນການນຳເຂົ້າສິນຄ້າ

ສປປ ລາວໄດ້ນຳເຂົ້າສິນຄ້າ ຈາກ 153 ປະເທດຈາກຂົງເຂດພາກພື້ນ ແລະ ສາກົນ. ສປປ ລາວ ນຳເຂົ້າສິນຄ້າຈາກປະເທດຂົງເຂດອາຊຽນຫລາຍກວ່າໝູ່ ໂດຍສະເພາະ ແມ່ນປະເທດໄທ ໃນປີ 2022 ການນຳເຂົ້າຈາກປະເທດໄທກວມເອົາ 48.9% ຂອງການນຳເຂົ້າທັງໝົດ ສິນຄ້າຕົ້ນຕໍທີ່ນຳເຂົ້າຈາກໄທແມ່ນ ນ້ຳມັນກະຊວນ (ກວມ 28% ຂອງການນຳເຂົ້າຈາກໄທທັງໝົດ), ເຄື່ອງດື່ມບໍ່ມີທາດເຫລົ້າ (7%), ນ້ຳມັນແອັດຊັງ (7%) ນ້ຳຕານ (7%), ລົດກະບະ (3%). ການນຳເຂົ້າຈາກປະເທດຫວຽດນາມ ກວມເອົາ 7.5% ຂອງການນຳເຂົ້າທັງໝົດ, ສິນຄ້າຕົ້ນຕໍທີ່ນຳເຂົ້າຈາກຫວຽດນາມແມ່ນ ນ້ຳມັນກະຊວນ (ກວມ 14% ຂອງກາານຳເຂົ້າທັງໝົດຈາກຫວຽດນາມ). ລົດຈັກ (6%), ນ້ຳມັນເຄື່ອງ (4%), ອາຫານສັດ (3%), ແລະ ເຫຍື້ອໄມ້ອັກ (3%).. ສ່ວນໃນຂົງເຂດອື່ນໆທີ່ບໍ່ແມ່ນອາຊຽນ ພົ້ນເດັ່ນແມ່ນນຳເຂົ້າຈາກ ສປ ຈີນ 24.6% ຂອງການນຳເຂົ້າທັງໝົດ ສິນຄ້າຕົ້ນຕໍທີ່ນຳເຂົ້າຈາກຈີນ ແມ່ນອຸປະກອນຄອມພິວເຕີ (ກວມ 6% ຂອງການນຳເຂົ້າຈາກໄທທັງໝົດ), ລົດໄຖນາ (3%), ເຫຍື້ອເຈ້ຍ 2%, ບັນທັດເລື່ອນ 2%, ພາຫະນະ 2%. ການນຳເຂົ້າຈາກອາເມລິກາ ກວມເອົາ 4.6% ຂອງການນຳເຂົ້າທັງໝົດ ແລະ ສິນຄ້າຕົ້ນຕໍທີ່ນຳເຂົ້າຈາກອາເມລິກາແມ່ນ ເຫຍື້ອເຈ້ຍ, ຢາວັກຊິນ, ເນື້ອເຍື້ອເສັ້ນໄຍ. ການນຳເຂົ້າຈາກ ຍີປຸ່ນ ກວມ 2.2% ຂອງການນຳເຂົ້າທັງໝົດ ແລະ ສິນຄ້າຕົ້ນຕໍທີ່ນຳເຂົ້າຈາກຍີປຸ່ນແມ່ນ ພາຫະນະ, ແກ້ວ, ເຄື່ອງຈັກຍົກ. ການນຳເຂົ້າຈາກ ສະຫະພາບເອີລົບ (27 ປະເທດ) ກວມເອົາ 2.1% ສິນຄ້າຕົ້ນຕໍແມ່ນ ເຫຍື້ອເຈ້ຍ, ເພັດ, ແລະ ເນື້ອເຫຍື້ອ. ຈາກຮູບສະແດງຂ້າງລຸ່ມ, ສັດສ່ວນການນຳເຂົ້າ ຂອງ ສປປ ລາວ ຍັງບໍ່ມີການປ່ຽນແປງເມື່ອທຽບກັບໄລຍະຜ່ານມາ ສ່ວນໃຫຍ່ກໍ່ຍັງເປັນປະເທດໃກ້ຄຽງ.

**ຮູບສະແດງ 27:** ປະເທດຕົ້ນຕໍທີ່ ສປປ ລາວ ນຳເຂົ້າ ທຽບໃສ່ 10 ປີຜ່ານມາ (2012 ແລະ 2022)




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ຮູບສະແດງ 28:** ບັນດາປະເທດທີ່ສົ່ງອອກສິນຄ້າໃຫ້ແກ່ ສປປ ລາວ ຫລື ສປປ ລາວ ນຳເຂົ້າຈາກປະເທດຕ່າງໆ ປີ 2022




**ແຫລ່ງຂໍ້ມູນ:** Trade map, 2023

## 3. ຊ່ອງທາງຂອງການນຳເຂົ້າ

ສປປ ລາວນຳເຂົ້າສິນຄ້າໂດຍຜ່ານດ່ານຕາມຊາຍແດນ ແລະ ການນຳເຂົ້າສ່ວນຫລາຍແມ່ນມາຈາກທາງບົກ ກວມເອົາ 94.2% ຂອງການນຳເຂົ້າທັງໝົດ ໃນປີ 2022. ນອກຈາກນັ້ນ, ຍັງມີການນຳເຂົ້າຜ່ານຊ່ອງທາງອື່ນ ເຊັ່ນ: ທາງອາກາດ ແລະ ລົດໄຟ ກວມເອົາ 3.0% ແລະ 2.2% ຕາມລຳດັບ. ສ່ວນການນຳເຂົ້າທາງນ້ຳ ແມ່ນມີໜ້ອຍຫລາຍ ກວມເອົາປະມານ 0.2% ຂອງການນຳເຂົ້າທັງໝົດ. ເມື່ອທຽບກັບ 10 ປີຜ່ານມາ ຊ່ອງທາງການນຳເຂົ້າໂດຍລວມ ແມ່ນບໍ່ປ່ຽນແປງ, ແຕ່ປະຈຸບັນແມ່ນມີການນຳເຂົ້າທີ່ສະດວກຂຶ້ນຈາກການນຳເຂົ້າຜ່ານລົດໄຟ.

**ຮູບສະແດງ 29:** ອັດຕາສ່ວນການນຳເຂົ້າທັງໝົດແບ່ງຕາມຮູບແບບວິທີຂອງການນຳເຂົ້າ ໃນປີ 2012 ແລະ 2022




**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ ແລະ ກະຊວງພະລັງງານ ແລະບໍ່ແຮ່, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

ສະຫລຸບແລ້ວ, ການນຳເຂົ້າຂອງ ສປປ ລາວ ປີ 2022 ມີຈັງຫວະເພີ່ມຂຶ້ນຫລາຍກວ່າປີ 2021 ສ່ວນໜຶ່ງກໍ່ແມ່ນຍ້ອນ ມີການນຳເຂົ້າປັດໄຈການຜະລິດເພື່ອສະໜອງໃຫ້ແກ່ກິດຈະກຳທັງເສດຖະກິດມີການຟື້ນໂຕຈາກຜົນກະທົບຈາກພະຍາດໂຄວິດ 19. ສຳລັບຊ່ອງທາງການນຳເຂົ້າ ກໍ່ເຊັ່ນດຽວກັບການສົ່ງອອກ ມີຊ່ອງທາງການນຳເຂົ້າທີ່ສະດວກສະບາຍຜ່ານທາງລົດໄຟ. ແຕ່ເຖິງຢ່າງໃດກໍ່ຕາມ, ການມີຊ່ອງທາງການນຳເຂົ້າທີ່ສະບາຍດັ່ງກ່າວ ອາດເປັນປັດໄຈທີ່ບໍ່ຊຸກຍູ້ການຜະລິດພາຍໃນ ເຊັ່ນ ປີ 2022 ຜ່ານມາ ທີ່ເປັນໄລຍະທີ່ປະເທດມີຄວາມຝືດເຄືອງທາງດ້ານເງິນຕາ, ແຕ່ການນຳເຂົ້າສິນຄ້າປະເພດກະສິກຳ ເຊັ່ນ ພືດຜັກທີ່ສາມາດຜະລິດຢູ່ພາຍໃນປະເທດໄດ້ນັ້ນ ກໍ່ມີການນຳເຂົ້າທີ່ມີມູນຄ່າສູງ ແລະ ທຽບກັບປີຜ່ານມາກໍ່ເພີ່ມຂຶ້ນຫລາຍ. ພ້ອມກັນນັ້ນ, ການນຳເຂົ້າສິນຄ້າຟູມເຟືອຍເຊັ່ນ ປະເພດເຫລົ້າກໍ່ມີມູນຄ່າສູງ ເຊິ່ງໃນໄລຍະທີ່ ສປປ ລາວ ພົບກັບບັນຫາຂາດແຄນເງິນຕາເພື່ອການຊຳລະສະສາງກັບຕ່າງປະເທດນີ້ ຄວນມີການສຶກສາໂຄງສ້າງການສົ່ງອອກທີ່ລະອຽດ ເພື່ອສາມາດມີນະໂຍບາຍແຊກແຊງ ແລະ ຫລຸດຜ່ອນການນຳເຂົ້າສິນຄ້າທີ່ມີຄວາມສາມາດຜລະຄຢູ່ພາຍໃນໄດ້ ແລະ ສິນຄ້າຟູມເຟືອຍຕ່າງໆ.

# ພາກທີ 3: ເຕັກນິກລະບອບວິທີ, ແຫຼ່ງຂໍ້ມູນ ແລະ ແຜນໃນຕໍ່ໜ້າ

## I. ນິຍາມ ແລະ ວິທີການຄິດໄລ່[4]

### 1.1 ມູນຄ່າການຄ້າ:

- ມູນຄ່າການຄ້າ: ແມ່ນການລວມມູນຄ່າການນຳເຂົ້າສິນຄ້າທັງໝົດ ກັບ ມູນຄ່າການສົ່ງອອກສິນຄ້າທັງໝົດ (ຫົວໜ່ວຍການຄິດໄລ່ລ້ານໂດລາສະຫະລັດ)
- ວິທີການຄິດໄລ່: ມູນຄ່າການຄ້າ = ການນຳເຂົ້າສິນຄ້າທັງໝົດ + ການສົ່ງອອກສິນຄ້າທັງໝົດ

### 1.2 ດຸນການຄ້າ:

- ດຸນການຄ້າ: ແມ່ນການປຽບທຽບລະຫວ່າງຜົນຕ່າງຂອງມູນຄ່າການນຳເຂົ້າສິນຄ້າທັງໝົດກັບມູນຄ່າການສົ່ງອອກສິນຄ້າທັງໝົດ (ຫົວໜ່ວຍການຄິດໄລ່ລ້ານໂດລາສະຫະລັດ)
- ວິທີການຄິດໄລ່: ດຸນການຄ້າ = ມູນຄ່າການສົ່ງອອກທັງໝົດ - ມູນຄ່າການນຳເຂົ້າທັງໝົດ

### 1.3 ອັດຕາການເປີດປະເທດ:

- ອັດຕາການເປີດປະເທດແມ່ນ:
- ວິທີຄິດໄລ່ ອັດຕາການເປີດປະເທດ = ມູນຄ່າການສົ່ງອອກ + ມູນຄ່າການນຳເຂົ້າ/ລວມຍອດຜະລິດຕະພັນພາຍໃນ (GDP)

### 1.4 ມູນຄ່າການນຳເຂົ້າ:

- ມູນຄ່າການນຳເຂົ້າທັງໝົດ: ແມ່ນຜົນລວມ ຂອງມູນຄ່າການນຳເຂົ້າສິນຄ້າທັງໝົດ ຂອງປະເທດ ໂດຍອີງໃສ່ໃບແຈ້ງພາສີສິນຄ້າຂາເຂົ້າ ເຊິ່ງປະກອບດ້ວຍການນຳເຂົ້າເສຍພາສີ, ຍົກເວັ້ນພາສີ, ນຳເຂົ້າຊົ່ວຄາວ ແລະ ນຳເຂົ້າຄືນ ທີ່ໄດ້ນັບເປັນສະຖິຕິດ້ານສິນຄ້າ ຂອງລະບົບ CPC (ຫົວໜ່ວຍການຄິດໄລ່: ລ້ານໂດລາສະຫະລັດ)
- ວິທີຄິດໄລ່: ແມ່ນມູນຄ່ານຳເຂົ້າສິນຄ້າຕາມຜະລິດຕະພັນ =ມູນຄ່າແຈ້ງພາສີຂາເຂົ້າາສິນຄ້າ 1 ຕາມລະຫັດ A… +ມູນຄ່າແຈ້ງພາສີຂາເຂົ້າ 2 ຕາມລະຫັດ A…+ມູນຄ່າແຈ້ງພາສີຂາເຂົ້າສິນຄ້າ n ຕາມລະຫັດສິນຄ້າ A)

### 1.5 ການສົ່ງອອກ:

- ການສົ່ງອອກ: ແມ່ນມູນຄ່າການສົ່ງອອກຂອງແຕ່ລະລາຍການສິນຄ້າຕາມລະຫັດສາລະບານຫຼຸດຜ່ອນອັດຕາພາສີ 2,4,6 ຫຼື 8 ຕົວເລກ (ຫົວໜ່ວຍການຄິດໄລ່ລ້ານໂດລາສະຫະລັດ)
- ວິທີການຄິດໄລ່: ມູນຄ່າການສົ່ງອອກສິນຄ້າຕາມຜະລິດຕະພັນ =ມູນຄ່າແຈ້ງພາສີຂາອອກສິນຄ້າ 1 ຕາມລະຫັດ A… +ມູນຄ່າແຈ້ງພາສີຂາອອກ 2ຕາມລະຫັດ A…+ມູນຄ່າແຈ້ງພາສີຂາອອກສິນຄ້າ n ຕາມລຳດັບສິນຄ້າ A)
- ການສົ່ງອອກຕໍ່ GDP= ມູນຄ່າການສົ່ງອອກ / GDP * 100

---

[4] ສຳລັບນິຍາມ ແລະ ວິທີການຄິດໄລ່ ຢູ່ໃນພາກນີ້ ແມ່ນນຳໃຊ້ນິຍາມ ແລະ ການຄິດໄລ່ ທີ່ໄດ້ລະບຸຢູ່ໃນປຶ້ມສຳນວນຂໍ້ມູນສະຖິຕິ ສຳລັບຕົວຊີ້ບອກ ຂອງ ສປປ ລາວ, ສູນສະຖິຕິແຫ່ງຊາດ, ກະຊວງ ແຜນການ ແລະ ການລົງທຶນ.

### 1.6 ການສົ່ງອອກຄືນໃໝ່:

- ການສົ່ງອອກຄືນໃໝ່: ແມ່ນຜົນລວມມູນຄ່າການສົ່ງອອກຄືນທັງໝົດຂອງປະເທດ ຫຼັງຈາກມີການນໍາເຂົ້າຊົ່ວຄາວທີ່ມີເວລາກໍານົດ, ອາດຈະມີ ຫລື ບໍ່ມີການປຸງແຕ່ງ ແລະ ສິນຄ້າທີ່ຈໍາເປັນຕ້ອງໄດ້ສົ່ງກັບປະເທດຕົ້ນທາງ ໂດຍອີງໃສ່ໃບແຈ້ງພາສີສິນຄ້າຂາອອກ (ຫົວໜ່ວຍການຄິດໄລ່ລ້ານໂດລາສະຫະລັດ ແລະ ກີບ)
- ວິທີການຄິດໄລ່: ມູນຄ່າການສົ່ງອອກຄືນໃໝ່ສິນຄ້າຕາມຜະລິດຕະພັນ =ມູນຄ່າແຈ້ງພາສີສົ່ງອອກສິນຄ້າຄືນໃໝ່ 1 + ມູນຄ່າແຈ້ງພາສີສົ່ງອອກຄືນ 2…+ ມູນຄ່າແຈ້ງພາສີສົ່ງອອກຄືນໃໝ່ສິນຄ້າ n

## II. ແຫຼ່ງຂໍ້ມູນ ແລະ ການເກັບກໍາຂໍ້ມູນ

ການສັງລວມ ຂໍ້ມູນການຄ້າ ແມ່ນສັງລວມເອົາທຸກການຄ້າດ້ານສິນຄ້າລະຫວ່າງປະເທດ ທີ່ຜ່ານດ່ານພາສີສາກົນ ໃນລະບົບ ASYCUDA, ເຊິ່ງໄດ້ສັງລວມຕາມລະບົບໃບແຈ້ງພາສີ (CPC: Customs Procedure Code) ຂອງ ກົມພາສີ, ກະຊວງການເງິນ ໂດຍການບັນທຶກມູນຄ່າທີ່ເປັນສິນຄ້າເທົ່ານັ້ນ (ຕາມຄູ່ມືການແນະນໍາສະຖິຕິການຄ້າລະຫວ່າງ ປະເທດດ້ານສິນຄ້າ ຂອງອົງການສະຫະປະຊາຊາດ ສະບັບ 2010 (IMTS2010). ໃນຂະບວນການສັງລວມທີມງານໄດ້ປັບປຸງ ແລະ ກວດແກ້ບາງຂໍ້ມູນເພື່ອຮັບປະກັນຄວາມສອດຄ່ອງ. ພ້ອມກັນນັ້ນ, ກໍ່ໄດ້ສັງລວມຂໍ້ມູນການສົ່ງອອກ-ນໍາເຂົ້າໄຟຟ້າ ໂດຍນໍາໃຊ້ຂໍ້ມູນຈາກການລາຍງານຂອງກະຊວງພະລັງງານ ແລະ ບໍ່ແຮ່.

ຂໍ້ມູນທີ່ໄດ້ຈາກ ກົມພາສີ, ກະຊວງການເງິນໃນປະຈຸບັນ ແມ່ນສາມາດເກັບກໍາໄດ້ 26 ອົງປະກອບຄື: ລະຫັດດ່ານ, ວັນທີ, ເດືອນ ແລະ ປີ ແຈ້ງພາສີ, ເລກທີແຈ້ງພາສີ, ວັນທີ, ເດືອນ ແລະ ປີຮັບຮອງສິນຄ້າສິນຄ້າ, ເລກທີຮັບຮອງສິນຄ້າ, ລະບອບໃບແຈ້ງພາສີ, ສະສາງ, ລໍາດັບ(ລາຍການສິນຄ້າ), ຊະນິດສິນຄ້າ, ລະຫັດສິນຄ້າ 8 ຕົວເລກ ຂອງອາຊຽນ, ລະຫັດສິນຄ້າພາຍໃນ 2 ຕົວເລກທ້າຍ, ເລກລະຫັດຜູ້ເສຍອາກອນ, ຊື່ບໍລິສັດ, ຕົ້ນກໍາເນີດສິນຄ້າ, ປະເທດຄູ່ຄ້າ (ປະເທດປາຍທາງ), ອັດຕາເລກປ່ຽນ (ກີບ/ໂດລາສະຫະລັດ), ວິທີການຂົນສົ່ງສິນຄ້າ (ທາງບົກ, ອາກາດ, ທາງນໍ້າ, ຕິດຕັ້ງການຂົນສົ່ງແບບຄົງທີ່ ສໍາລັບໄຟຟ້າ), ຫົວໜ່ວຍເປັນຂຽນເປັນພາສາລາວ ແລະ ພາສາອັງກິດ, ຈໍານວນສິນຄ້າ, ນໍ້າໜັກສິນຄ້າ, ມູນຄ່າເປັນໂດລາ, ມູນຄ່າເປັນກີບ, ມູນຄ່າການຂົນສົ່ງ, ຄ່າປະກັນໄພ ແລະ ອື່ນໆ.

## III. ຂໍ້ມູນທີ່ສາມາດສະໜອງໃຫ້ຜູ້ຊົມໃຊ້

ໃນກອບອາຊຽນໄດ້ກໍານົດໃຫ້ບັນດາປະເທດສະມາຊິກອາຊຽນສະໜອງຂໍ້ມູນຜ່ານລະບົບ DTT System (https://dtt.aseanstats.org) ທຸກໆ 02 ເດືອນ ຖັດເດືອນທີ່ 3 ຕ້ອງສົ່ງຂໍ້ມູນດັ່ງກ່າວ ທີ່ປະກອບມີ 15 ອົງປະກອບຄື: (1) ປະເທດທີ່ລາຍງານ (Reporter), (2) ກະແສ ຂອງການຄ້າ (Flow), (3) ລະບົບການລາຍງານ (Trade System), (4) ປີ (Year), (5) ໄລຍະການລາຍງານ (Period), (6) ປະເທດຄູ່ຄ້າ (Partner), (7) ລະຫັດສິນຄ້າ 8 ຕົວເລກ (Product 8 digit), (8) ການຂົນສົ່ງ (Transport), (9) ມູນຄ່າ ເປັນໂດລາສະຫະລັດ (ValUSD), (10) ນໍ້າໜັກ (Netmass Kg), (11) ຈໍານວນ (Qtyofsu), (12) ຫົວໜ່ວຍ(ZZZZ), (13) ກໍາເນີດສິນຄ້າ ປະເທດສົ່ງອອກ (Countries Of Origin), (14) ປະເທດຄູ່ຄ້າ ( Countries condenetion), (14) ປະເທດຝາກຂາຍສິນຄ້າ (Country Consignment) ແລະ (15) ສິດທີ່ພິເສດ ຂອງການຄ້າ (Preference).

## IV. ແຜນການຕໍ່ໜ້າ

ເພື່ອເປັນການສະໜອງສະຖິຕິການຄ້າໃຫ້ແກ່ລັດຖະບານ ກໍ່ຄືສັງຄົມ ໄດ້ນໍາໃຊ້ຂໍ້ມູນທີ່ມີຄຸນະພາບດີຂຶ້ນ, ກົມເສດຖະກິດ, ສູນສະຖິຕິແຫ່ງຊາດມີແຜນພັດທະນາ ການຜະລິດ ແລະ ການສະໜອງຂໍ້ມູນການຄ້າ ໂດຍມີແຜນຈຸດສຸມວຽກສະຖິຕິການຄ້າດັ່ງນີ້:

- ວຽກຮ່ວມມື ແລະ ປະສານງານລະຫວ່າງຂະແໜງການ: (1) ສືບຕໍ່ປະສານງານກັບກົມພາສີ, ກະຊວງການເງິນ ແລະ ກົມແຜນການ ແລະ ການຮ່ວມມື, ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອສາມາດເກັບກຳຂໍ້ມູນນຳເຂົ້າ-ສົ່ງອອກ ປະຈຳເດືອນຕາມທີ່ໄດ້ກຳນົດ ແມ່ນ ທຸກໆ ວັນທີ 10 ເດືອນຖັດໄປ ມາເປັນ ວັນທີ 2 ເດືອນຖັດໄປ (ອີງໃສ່ ຄວາມຕ້ອງການຂໍ້ມູນ ເພື່ອລາຍງານໃຫ້ລັດຖະບານ ປະຈຸບັນ); (2) ຈັດກອງປະຊຸມປຶກສາຫາລືຕົວເລກ ການນຳເຂົ້າ-ສົ່ງອອກ ຮ່ວມມກັບຂະແໜງການເຊັ່ນ ກົມພາສີ, ກະຊວງການເງິນ, ກົມນຳເຂົ້າ-ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ, ກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ ແລະ ກົມແຜນການ ແລະ ການຮ່ວມມື, ກະຊວງພະລັງງານ ແລະ ບໍ່ແຮ່; (3) ທົບທວນຄືນ ເພື່ອສ້າງບົດບັນທຶກຄວາມເຂົ້າໃຈ ແລະ ຂໍ້ຕົກລົງ ການເຮັດ ຂອງທີມງານສະຖິຕິການຄ້າ ລະຫວ່າງ ປະເທດດ້ານສິນຄ້າ ເພື່ອໃຫ້ສາມາດນຳມາໃຊ້ໃນວຽກງານດ້ານວິຊາການກັບຂະແໜງການ.
- ສືບຕໍ່ຮ່ວມມືກັບສາກົນ ແລະ ພາກພື້ນເປັນຕົ້ນແມ່ນ ວຽກຮ່ວມມືກັບອາຊຽນ ໂດຍຈະ: (1) ສືບຕໍ່ ດຶງເອົາ/ໂລດຂໍ້ມູນ ແລະ ປັບປຸງຂໍ້ມູນສາລະບານອັດຕາສີເອກະພາບອາຊຽນ ສະບັບໃໝ່ 2023 (AHTN2023) ເຂົ້າຖານຂໍ້ມູນ Eurotrace; (2) ທົດລອງນຳໃຊ້ Eurotrace SQL Server ກວດ ແລະ ສະໜອງຂໍ້ມູນຈຳນວນໜຶ່ງມາວິເຄາະຂຽນບົດລາຍງານ ແລະ ສະໜອງໃຫ້ກອງເຂາອາຊຽນ; (3) ເຂົ້າຮ່ວມກອງປະຊຸມສຳມະນາການສ້າງຄວາມອາດສາມາດ ຂອງອາຊຽນ, ເຂົ້າຮ່ວມກອງປະຊຸມສຳມະນາລັບ CLMV ແລະ ເຂົ້າຮ່ວມກອງປະຊຸມປະຈຳປີ ຂອງວຽກສະຖິຕິການຄ້າ ລະຫວ່າງ ປະເທດດ້ານສິນຄ້າ; (4) ເຂົ້າຮ່ວມປະຊຸມ ແລະ ສະໜອງຂໍ້ມູນ ໃຫ້ແກ່ພາກສ່ວນສາກົນຕ່າງໆ ຕາມຂອບເຂດການສະໜອງຂໍ້ມູນທີ່ໄດ້ກຳນົດໃນກົດໝາຍສະຖິຕິ.
- ວຽກຜະລິດ ແລະ ສະໜອງຂໍ້ມູນ: (1) ສັງລວມ, ກວດແກ້, ວິເຄາະ, ຄິດໄລ່, ສະໜອງຂໍ້ມູນ ແລະ ຂຽນບົດລາຍງານການຄ້າ ປະຈຳປີ; (2) ສືບຕໍ່ປັບປຸງຂໍ້ມູນເພື່ອກະກຽມຄິດໄລ່ດັດຊະນີລາຄານຳເຂົ້າ-ສົ່ງອອກ.

# ເອກະສານອ້າງອີງ


1. ສາລະບານອັດຕາພາສີລະບົບເອກະພາບອາຊຽນ, ກົມພາສີ, ກະຊວງການເງິນ 2003. ASEAN HARMONIZED TARIFF NOMENCLATURE;
2. ບົດລາຍງານສະພາບທ່າອ່ຽງເສດຖະກິດ ຂອງ ສປປ ລາວ ປີ 2023, ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ;
3. ບົດລາຍປະເມີນທ່າອ່ຽງເສດຖະກິດຂອງອົງການການເງິນລະຫວ່າງປະເທດ WORLD ECONOMIC OUTLOOL, APRIL 2023, IMF;
4. ບົດລາຍງານປະເມີນການຄ້າຂອງອົງການການຄ້າໂລກ 2023. GLOBAL TRADE OUTLOOK AND STATISTICS, WTO;
5. ບົດລາຍງານຂະແໜງການ, ກະຊວງໂຍທາທິການ ແລະ ຂົນສົ່ງ ປະຈໍາປີ 2022
6. ປື້ມສໍາມວນຂໍ້ມູນສະຖິຕິສໍາລັບຕົວຊີ້ບອກຂອງ ສປປ ລາວ 2017, ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## ຕາຕະລາງຊ້ອນທ້າຍ

**ຕາຕະລາງ 1:** ມູນຄ່າການຄ້າ ຕາມໝວດສິນຄ້າ ປີ 2022 (ລວມຍອດມູນຄ່າ ແມ່ນການນຳເຂົ້າ ແລະສົ່ງອອກທັງໝົດ)

**ຫົວໜ່ວຍ**: ລ້ານໂດລາສະຫະລັດ

| ລ/ດ | ໝວດສິນຄ້າ | 2018 | 2019 | 2020 | 2021 | 2022 | ອັດຕາສະເລ່ຍ | ເປີເຊັນ |
|---|---|---|---|---|---|---|---|---|
| 1 | ໝວດສັດມີຊີວິດ | 221.3 | 493.0 | 649.4 | 542.5 | 297.6 | -45.1 | 1.9 |
| 2 | ໝວດຜະລິດຕະພັນຈາກພືດ | 599.2 | 796.5 | 929.9 | 1,013.9 | 1,143.3 | 12.8 | 7.5 |
| 3 | ໝວດໄຂມັນ ແລະ ນ້ຳມັນຈາກສັດ ຫຼື ພືດ | 6.0 | 11.0 | 11.1 | 10.9 | 12.4 | 14.0 | 0.1 |
| 4 | ໝວດອາຫານປຸງແຕ່ງ ແລະ ຄື່ອງດື່ມ | 921.9 | 972.1 | 829.5 | 915.0 | 1,258.8 | 37.6 | 8.2 |
| 5 | ໝວດຜະລິດຕະພັນແຮ່ ແລະ ໄຟຟ້າ | 3,227.4 | 3,096.0 | 3,360.5 | 3,824.6 | 4,603.4 | 20.4 | 30.1 |
| 6 | ໝວດຜະລິດຕະພັນອຸສາຫະກຳເຄມີ | 547.1 | 600.3 | 529.0 | 629.6 | 912.2 | 44.9 | 6.0 |
| 7 | ໝວດຜະລິດຕະພັນພຣາສຕິກ | 381.1 | 515.2 | 473.1 | 548.9 | 631.2 | 15.0 | 4.1 |
| 8 | ໝວດຜະລິດຕະພັນໜັງດິບ ແລະ ຂົນສັດ | 19.6 | 38.6 | 42.7 | 49.5 | 91.0 | 83.8 | 0.6 |
| 9 | ໝວດໄມ້ ແລະ ເຄື່ອງທີ່ເຮັດດ້ວຍໄມ້ | 95.0 | 142.8 | 98.7 | 151.5 | 176.2 | 16.3 | 1.2 |
| 10 | ໝວດເຍື້ອໄມ້ ຫຼື ເສັ້ນໄຍ ແລະ ເຈ້ຍແຂງ | 371.9 | 414.3 | 444.6 | 1,178.0 | 1,288.5 | 9.4 | 8.4 |
| 11 | ໝວດຜ້າຕ່ຳ ແລະ ເຄື່ອງທີ່ເຮັດດ້ວຍປ່າ | 354.6 | 425.1 | 375.1 | 435.4 | 532.4 | 22.3 | 3.5 |
| 12 | ໝວດເກີບ, ຄັນຮົ່ມ ແລະ ໄມ້ຄ້ອນເທົ້າ | 70.0 | 89.1 | 106.4 | 138.8 | 209.3 | 50.7 | 1.4 |
| 13 | ໝວດເຄື່ອງທີ່ເຮັດດ້ວຍຫີນ ແລະ ແກ້ວ | 83.2 | 107.4 | 107.4 | 220.7 | 244.9 | 11.0 | 1.6 |
| 14 | ໝວດໄຂ່ມຸກທຳມະຊາດ ຫຼື ໄຂ່ມຸກລ້ຽງ | 271.9 | 247.8 | 489.0 | 1,262.6 | 1,131.2 | -10.4 | 7.4 |
| 15 | ໝວດໂລຫະທຳມະດາ | 1,420.0 | 1,179.2 | 738.3 | 483.9 | 485.5 | 0.3 | 3.2 |
| 16 | ໝວດເຄື່ອງຈັກ ແລະ ອຸປະກອນໄຟຟ້າ | 2,191.5 | 1,733.2 | 1,419.8 | 1,273.8 | 1,438.1 | 12.9 | 9.4 |
| 17 | ໝວດຍານພາຫະນະທາງບົກ, ອາກາດ, ທາງນ້ຳ | 683.5 | 556.6 | 444.5 | 688.5 | 625.4 | -9.2 | 4.1 |
| 18 | ໝວດອຸປະກອນທັດສະນະສາດ | 78.7 | 78.3 | 72.5 | 104.5 | 81.7 | -21.8 | 0.5 |
| 19 | ໝວດອາວຸດ ແລະ ລູກປືນ | 15.5 | 0.8 | 0.5 | 0.0 | 0.0 | - | 0.0 |
| 20 | ໝວດຜະລິດຕະພັນຕ່າງໆ | 103.5 | 128.8 | 89.6 | 112.2 | 116.3 | 3.6 | 0.8 |
| 21 | ໝວດເຄື່ອງສິລະປະກຳ | 0.3 | 0.1 | 0.1 | 0.1 | 0.2 | 234.5 | 0.0 |
| 22 | ໝວດອື່ນໆ | - | - | - | - | - | - | - |
| | **ລວມ** | **11,663.4** | **11,626.3** | **11,211.5** | **13,584.8** | **15,279.6** | **12.5** | **100.0** |

**ແຫຼ່ງຂໍ້ມູນ**: ກົມພາສີ, ກະຊວງການເງິນ ແລະ ກະຊວງພະລັງງານ ແລະບໍ່ແຮ່, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ຕາຕະລາງ 2:** ການສົ່ງອອກຕາມໝວດສິນຄ້າ ປີ 2022 **ຫົວໜ່ວຍ:** ລ້ານໂດລາສະຫະລັດ

| ລ/ດ | ໝວດສິນຄ້າ | 2018 | 2019 | 2020 | 2021 | 2022 | ອັດຕາສະເລ່ຍ | ເປີເຊັນ |
|---|---|---|---|---|---|---|---|---|
| 1 | ໝວດສັດມີຊີວິດ | 94.7 | 234.6 | 300.3 | 260.8 | 135.9 | -47.9 | 1.6 |
| 2 | ໝວດຜະລິດຕະພັນຈາກພືດ | 488.3 | 646.4 | 782.8 | 872.4 | 977.7 | 12.1 | 11.6 |
| 3 | ໝວດໄຂມັນ ແລະ ນ້ຳມັນຈາກສັດ ຫຼື ພືດ | 0.5 | 0.4 | 0.4 | 0.1 | 0.1 | -48.8 | 0.0 |
| 4 | ໝວດອາຫານປຸງແຕ່ງ ແລະ ຄື່ອງດື່ມ | 434.5 | 473.7 | 370.8 | 386.6 | 530.8 | 37.3 | 6.3 |
| 5 | ໝວດຜະລິດຕະພັນແຮ່ ແລະ ໄຟຟ້າ | 2,248.1 | 2,084.9 | 2,620.2 | 2,930.9 | 3,193.7 | 9.0 | 37.9 |
| 6 | ໝວດຜະລິດຕະພັນອຸສາຫະກຳເຄມີ | 226.9 | 230.3 | 191.0 | 202.5 | 412.9 | 103.9 | 4.9 |
| 7 | ໝວດຜະລິດຕະພັນພຣາສຕິກ | 180.6 | 279.5 | 254.2 | 313.7 | 385.1 | 22.8 | 4.6 |
| 8 | ໝວດຜະລິດຕະພັນໜັງດິບ ແລະ ຂົນສັດ | 1.0 | 1.7 | 1.7 | 1.1 | 1.3 | 21.5 | 0.0 |
| 9 | ໝວດໄມ້ ແລະ ເຄື່ອງທີ່ເຮັດດ້ວຍໄມ້ | 39.9 | 52.4 | 21.8 | 48.6 | 61.8 | 27.0 | 0.7 |
| 10 | ໝວດເຍື້ອໄມ້ ຫຼື ເສັ້ນໄຍ ແລະ ເຈ້ຍແຂງ | 294.4 | 298.5 | 302.3 | 827.0 | 852.4 | 3.1 | 10.1 |
| 11 | ໝວດຜ້າຕ່ຳ ແລະ ເຄື່ອງທີ່ເຮັດດ້ວຍປ່າ | 199.3 | 219.5 | 196.1 | 198.7 | 268.8 | 35.3 | 3.2 |
| 12 | ໝວດເກີບ, ຄັນຮົ່ມ ແລະ ໄມ້ຄ້ອນເທົ້າ | 61.6 | 79.4 | 94.9 | 129.5 | 193.8 | 49.6 | 2.3 |
| 13 | ໝວດເຄື່ອງທີ່ເຮັດດ້ວຍຫີນ ແລະ ແກ້ວ | 0.8 | 0.9 | 6.0 | 89.9 | 126.3 | 40.4 | 1.5 |
| 14 | ໝວດໄຂ່ມຸກທຳມະຊາດ ຫຼື ໄຂ່ມຸກລ້ຽງ | 184.8 | 223.0 | 473.9 | 980.6 | 830.9 | -15.3 | 9.9 |
| 15 | ໝວດໂລຫະທຳມະດາ | 761.7 | 451.1 | 224.9 | 94.8 | 104.3 | 10.0 | 1.2 |
| 16 | ໝວດເຄື່ອງຈັກ ແລະ ອຸປະກອນໄຟຟ້າ | 511.1 | 427.8 | 293.9 | 279.9 | 251.4 | -10.2 | 3.0 |
| 17 | ໝວດຍານພາຫະນະທາງບົກ, ອາກາດ, ທາງນ້ຳ | 19.9 | 12.6 | 7.0 | 7.2 | 16.2 | 124.3 | 0.2 |
| 18 | ໝວດອຸປະກອນທັດສະນະສາດ | 24.4 | 27.7 | 26.5 | 28.4 | 33.8 | 19.1 | 0.4 |
| 19 | ໝວດອາວຸດ ແລະ ລູກປືນ | - | - | - | - | - | - | - |
| 20 | ໝວດຜະລິດຕະພັນຕ່າງໆ | 42.3 | 84.4 | 26.8 | 46.6 | 43.8 | -6.0 | 0.5 |
| 21 | ໝວດເຄື່ອງສິລະປະກຳ | - | 0.0 | 0.0 | 0.0 | 0.0 | 606.6 | 0.0 |
| 22 | ໝວດອື່ນໆ | - | - | - | - | - | - | - |
| | **ລວມ** | **5,814.9** | **5,828.9** | **6,195.7** | **7,699.6** | **8,421.1** | **9.4** | **100.0** |

**ແຫຼ່ງຂໍ້ມູນ**: ກົມພາສີ, ກະຊວງການເງິນ ແລະ ກະຊວງພະລັງງານ ແລະບໍ່ແຮ່, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ຕາຕະລາງ 3:** ການສົ່ງອອກສິນຄ້າ ໄປປະເທດຕ່າງໆ ໃນປີ 2022 **ຫົວໜ່ວຍ:** ລ້ານໂດລາສະຫະລັດ

| ລ/ດ | ຂົງເຂດ | 2018 | 2019 | 2020 | 2021 | 2022 | ອັດຕາສະເລ່ຍ | ເປີເຊັນ |
|---|---|---|---|---|---|---|---|---|
| **I** | **ໃນອາຊຽນ** | **3,726.1** | **3,512.7** | **4,037.6** | **4,352.6** | **4,731.9** | **8.7** | **56.2** |
| 1 | ບຣູໄນດາຣູຊາລັມ | - | - | - | 0.0 | 0.0 | -3.8 | 0.0 |
| 2 | ກໍາປູເຈຍ | 7.0 | 16.8 | 93.7 | 170.0 | 198.0 | 16.4 | 2.4 |
| 3 | ອິນໂດເນເຊຍ | 1.7 | 2.3 | 45.3 | 18.4 | 1.5 | -91.8 | 0.0 |
| 4 | ມາເລເຊຍ | 9.1 | 14.9 | 10.4 | 6.3 | 9.5 | 50.4 | 0.1 |
| 5 | ມຽນມາ | 0.6 | 1.9 | 13.4 | 2.4 | 4.3 | 81.5 | 0.1 |
| 6 | ຟິລິບປິນ | 3.0 | 0.3 | 9.4 | 9.9 | 8.9 | -10.5 | 0.1 |
| 7 | ສິງກະໂປ | 17.3 | 14.7 | 42.1 | 92.0 | 164.1 | 78.4 | 1.9 |
| 8 | ໄທ | 2,802.1 | 2,406.8 | 2,786.0 | 2,784.7 | 2,943.0 | 5.7 | 34.9 |
| 9 | ຫວຽດນາມ | 885.3 | 1,054.9 | 1,037.4 | 1,269.0 | 1,402.7 | 10.5 | 16.7 |
| **II** | **ນອກອາຊຽນ** | **2,084.4** | **2,283.2** | **2,152.5** | **3,312.5** | **3,672.2** | **10.9** | **43.6** |
| 1 | ອົດສະຕຣາລີ | 1.5 | 6.9 | 88.7 | 348.5 | 395.1 | 13.4 | 4.7 |
| 2 | ການາດາ | 15.0 | 13.6 | 6.5 | 7.5 | 10.4 | 38.3 | 0.1 |
| 3 | ຈີນ | 1,546.5 | 1,672.3 | 1,465.9 | 2,248.0 | 2,396.9 | 6.6 | 28.5 |
| 4 | ສະຫະພາບເອີຣົບ 27 ປະເທດ | 163.0 | 199.3 | 215.0 | 193.4 | 245.3 | 26.8 | 2.9 |
| 5 | ອິນເດຍ | 128.8 | 90.6 | 109.0 | 75.1 | 102.1 | 36.0 | 1.2 |
| 6 | ຍີ່ປຸ່ນ | 86.4 | 93.6 | 84.7 | 82.9 | 132.0 | 59.3 | 1.6 |
| 7 | ສາທາລະນະລັດເກົາຫຼີ (ເກົາຫຼີໃຕ້) | 4.5 | 5.2 | 11.2 | 11.2 | 21.2 | 88.6 | 0.3 |
| 8 | ນິວຊີແລນ | 0.0 | 0.0 | 0.1 | 0.3 | 0.6 | 116.7 | 0.0 |
| 9 | ປາກີສະຖານ | 0.5 | 0.0 | 0.0 | 0.2 | - | -100.0 | - |
| 10 | ຣັດເຊຍ | 0.0 | 0.3 | 2.5 | 1.4 | 0.1 | -92.8 | 0.0 |
| 11 | ສະຫະລັດອາເມລິກາ | 26.9 | 29.5 | 31.5 | 67.5 | 111.9 | 65.9 | 1.3 |
| 12 | ຮົງກອງ | 31.6 | 58.7 | 50.1 | 88.3 | 81.2 | -8.1 | 1.0 |
| 13 | ສວິດເຊີແລນ | 23.4 | 58.1 | 35.2 | 115.9 | 76.1 | -34.4 | 0.9 |
| 14 | ເນເທີແລນ | 7.4 | 14.2 | 21.5 | 35.4 | 45.7 | 29.1 | 0.5 |
| 15 | ອັງກິດ | 20.3 | 22.7 | 23.4 | 21.8 | 29.2 | 33.7 | 0.3 |
| 16 | ອີມີແລັດ | 18.6 | 8.4 | 0.5 | 4.6 | 7.5 | 61.8 | 0.1 |
| 17 | ໄຕຫວັນ | 4.0 | 3.5 | 3.3 | 4.9 | 6.1 | 24.9 | 0.1 |
| 18 | ຕຸຍກີ | 5.5 | 5.0 | 2.4 | 4.3 | 5.9 | 38.5 | 0.1 |
| 19 | ນອກແວ | 0.0 | 0.0 | 0.1 | 0.6 | 2.9 | 392.5 | 0.0 |
| 20 | ແມດຊິໂກ | 0.1 | 0.2 | 0.2 | 0.5 | 1.4 | 165.1 | 0.0 |
| **III** | **ປະເທດອື່ນໆໃນໂລກ** | **4.4** | **33.0** | **5.6** | **34.5** | **17.0** | **-50.6** | **0.2** |
| **ລວມ** | | **5,814.9** | **5,828.9** | **6,195.7** | **7,699.6** | **8,421.1** | **9.4** | **100.0** |

**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ ແລະ ກະຊວງພະລັງງານ ແລະບໍ່ແຮ່, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ຕາຕະລາງ 4:** ການນຳເຂົ້າຕາມໝວດສິນຄ້າ ປີ 2022 **ຫົວໜ່ວຍ:** ລ້ານໂດລາສະຫະລັດ

| ລ/ດ | ໝວດສິນຄ້າ | 2018 | 2019 | 2020 | 2021 | 2022 | ອັດຕາສະເລ່ຍ | ເປີເຊັນ |
|---|---|---|---|---|---|---|---|---|
| 1 | ໝວດສັດມີຊີວິດ | 126.6 | 258.4 | 349.0 | 281.6 | 161.7 | -42.6 | 2.4 |
| 2 | ໝວດຜະລິດຕະພັນຈາກພືດ | 110.9 | 150.1 | 147.0 | 141.5 | 165.6 | 17.1 | 2.4 |
| 3 | ໝວດໄຂມັນ ແລະ ນ້ຳມັນຈາກສັດ ຫຼື ພືດ | 5.5 | 10.6 | 10.7 | 10.7 | 12.3 | 14.9 | 0.2 |
| 4 | ໝວດອາຫານປຸງແຕ່ງ ແລະ ຄື່ອງດື່ມ | 487.4 | 498.3 | 458.7 | 528.3 | 728.0 | 37.8 | 10.6 |
| 5 | ໝວດຜະລິດຕະພັນແຮ່ ແລະ ໄຟຟ້າ | 979.4 | 1,011.1 | 740.3 | 893.8 | 1,409.7 | 57.7 | 20.6 |
| 6 | ໝວດຜະລິດຕະພັນອຸສາຫະກຳເຄມີ | 320.2 | 370.0 | 338.0 | 427.1 | 499.4 | 16.9 | 7.3 |
| 7 | ໝວດຜະລິດຕະພັນພຣາສຕິກ | 200.5 | 235.7 | 218.9 | 235.2 | 246.0 | 4.6 | 3.6 |
| 8 | ໝວດຜະລິດຕະພັນໜັງດິບ ແລະ ຂົນສັດ | 18.5 | 37.0 | 41.0 | 48.4 | 89.7 | 85.2 | 1.3 |
| 9 | ໝວດໄມ້ ແລະ ເຄື່ອງທີ່ເຮັດດ້ວຍໄມ້ | 55.1 | 90.4 | 76.9 | 102.8 | 114.4 | 11.3 | 1.7 |
| 10 | ໝວດເຍື້ອໄມ້ ຫຼື ເສັ້ນໄຍ ແລະ ເຈ້ຍແຂງ | 77.5 | 115.8 | 142.3 | 351.1 | 436.1 | 24.2 | 6.4 |
| 11 | ໝວດຜ້າຕ່ຳ ແລະ ເຄື່ອງທີ່ເຮັດດ້ວຍປ່າ | 155.4 | 205.6 | 179.0 | 236.7 | 263.6 | 11.4 | 3.8 |
| 12 | ໝວດເກີບ, ຄັນຮົ່ມ ແລະ ໄມ້ຄ້ອນເທົ້າ | 8.4 | 9.7 | 11.5 | 9.3 | 15.5 | 66.2 | 0.2 |
| 13 | ໝວດເຄື່ອງທີ່ເຮັດດ້ວຍຫີນ ແລະ ແກ້ວ | 82.4 | 106.5 | 101.4 | 130.8 | 118.6 | -9.3 | 1.7 |
| 14 | ໝວດໄຂ່ມຸກທຳມະຊາດ ຫຼື ໄຂ່ມຸກລ້ຽງ | 87.0 | 24.7 | 15.1 | 282.0 | 300.3 | 6.5 | 4.4 |
| 15 | ໝວດໂລຫະທຳມະດາ | 658.4 | 728.1 | 513.4 | 389.1 | 381.2 | -2.0 | 5.6 |
| 16 | ໝວດເຄື່ອງຈັກ ແລະ ອຸປະກອນໄຟຟ້າ | 1,680.4 | 1,305.5 | 1,125.9 | 993.8 | 1,186.7 | 19.4 | 17.3 |
| 17 | ໝວດຍານພາຫະນະທາງບົກ, ອາກາດ, ທາງນ້ຳ | 663.6 | 544.0 | 437.5 | 681.3 | 609.3 | -10.6 | 8.9 |
| 18 | ໝວດອຸປະກອນທັດສະນະສາດ | 54.3 | 50.6 | 46.0 | 76.0 | 47.8 | -37.1 | 0.7 |
| 19 | ໝວດອາວຸດ ແລະ ລູກປືນ | 15.5 | 0.8 | 0.5 | 0.0 | 0.0 | 112.2 | 0.0 |
| 20 | ໝວດຜະລິດຕະພັນຕ່າງໆ | 61.2 | 44.4 | 62.8 | 65.6 | 72.4 | 10.4 | 1.1 |
| 21 | ໝວດເຄື່ອງສິລະປະກຳ | 0.3 | 0.1 | 0.1 | 0.0 | 0.1 | 204.5 | 0.0 |
| 22 | ໝວດອື່ນໆ | - | - | - | - | - | - | - |
| | **ລວມ** | **5,848.5** | **5,797.4** | **5,015.8** | **5,885.2** | **6,858.5** | **16.5** | **100.0** |

**ແຫຼ່ງຂໍ້ມູນ**: ກົມພາສີ, ກະຊວງການເງິນ ແລະ ກະຊວງພະລັງງານ ແລະບໍ່ແຮ່, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ຕາຕະລາງ 5:** ປະເທດທີ່ ສປປ ລາວ ນຳເຂົ້າໃນ ປີ 2022 **ຫົວໜ່ວຍ:** ລ້ານໂດລາສະຫະລັດ

| ລ/ດ | ຂົງເຂດ | 2018 | 2019 | 2020 | 2021 | 2022 | ອັດຕາສະເລ່ຍ | ເປີເຊັນ |
|---|---|---|---|---|---|---|---|---|
| **I** | **ໃນອາຊຽນ** | **3,821.2** | **3,514.9** | **3,002.8** | **3,348.0** | **3,964.5** | **18.4** | **57.8** |
| 1 | ບຣູໄນດາຣູຊາລັມ | 0.0 | 0.0 | 0.0 | 0.0 | 0.0 | 269.2 | 0.0 |
| 2 | ກຳປູເຈຍ | 0.4 | 0.3 | 2.3 | 6.7 | 5.0 | -24.5 | 0.1 |
| 3 | ອິນໂດເນເຊຍ | 43.7 | 31.0 | 20.7 | 19.6 | 18.3 | -6.9 | 0.3 |
| 4 | ມາເລເຊຍ | 14.6 | 22.9 | 23.9 | 21.9 | 57.9 | 165.0 | 0.8 |
| 5 | ມຽນມາ | 0.2 | 3.0 | 0.4 | 9.7 | 11.3 | 16.6 | 0.2 |
| 6 | ຟິລິບປິນ | 2.2 | 1.8 | 1.7 | 2.6 | 2.2 | -14.0 | 0.0 |
| 7 | ສິງກະໂປ | 47.5 | 88.0 | 63.4 | 64.5 | 84.8 | 31.4 | 1.2 |
| 8 | ໄທ | 3,104.3 | 2,916.5 | 2,487.1 | 2,756.2 | 3,356.6 | 21.8 | 48.9 |
| 9 | ຫວຽດນາມ | 608.4 | 451.5 | 403.3 | 466.8 | 428.3 | -8.2 | 6.2 |
| **II** | **ນອກອາຊຽນ** | **1,719.4** | **2,262.9** | **2,001.9** | **2,522.1** | **2,875.2** | **14.0** | **41.9** |
| 1 | ອົດສະຕຣາລີ | 33.4 | 52.4 | 82.5 | 99.8 | 69.6 | -30.2 | 1.0 |
| 2 | ການາດາ | 0.8 | 3.4 | 4.4 | 20.8 | 35.4 | 70.8 | 0.5 |
| 3 | ຈີນ | 1,283.6 | 1,681.0 | 1,295.1 | 1,329.7 | 1,678.1 | 26.2 | 24.5 |
| 4 | ສະຫະພາບເອີຣົບ 27 ປະເທດ | 95.2 | 98.2 | 88.0 | 131.2 | 142.6 | 8.7 | 2.1 |
| 5 | ອິນເດຍ | 26.0 | 34.7 | 35.6 | 40.4 | 24.1 | -40.3 | 0.4 |
| 6 | ຍີ່ປຸ່ນ | 125.4 | 118.2 | 177.2 | 175.2 | 151.6 | -13.5 | 2.2 |
| 7 | ສາທາລະນະລັດເກົາຫຼີ (ເກົາຫຼີໃຕ້) | 67.0 | 71.4 | 56.5 | 62.7 | 65.0 | 3.7 | 0.9 |
| 8 | ນິວຊີແລນ | 0.9 | 0.5 | 1.1 | 1.1 | 1.5 | 34.3 | 0.0 |
| 9 | ປາກິສະຖານ | 4.3 | 3.9 | 4.4 | 7.8 | 10.9 | 39.8 | 0.2 |
| 10 | ຣັດເຊຍ | 1.1 | 10.7 | 4.4 | 27.8 | 11.3 | -59.6 | 0.2 |
| 11 | ສະຫະລັດອາເມລິກາ | 21.6 | 77.9 | 123.5 | 266.1 | 314.2 | 18.1 | 4.6 |
| 12 | ຮົງກອງ | 22.2 | 32.1 | 26.6 | 26.6 | 20.8 | -21.8 | **0.3** |
| 13 | ສວິດເຊີແລນ | 1.9 | 2.9 | 1.7 | 261.3 | 281.7 | 7.8 | 4.1 |
| 14 | ເນເທີແລນ | 1.1 | 5.2 | 4.8 | 9.5 | 3.1 | -67.0 | 0.0 |
| 15 | ອັງກິດ | 14.4 | 35.7 | 20.2 | 31.5 | 37.4 | 18.9 | 0.5 |
| 16 | ອິມີແລັດ | 1.9 | 6.2 | 54.8 | 4.5 | 3.9 | -13.5 | 0.1 |
| 17 | ໄຕຫວັນ | 12.1 | 22.2 | 18.6 | 21.2 | 19.3 | -9.2 | 0.3 |
| 18 | ຕຸຍກີ | 1.2 | 1.5 | 0.7 | 0.6 | 0.3 | -53.5 | 0.0 |
| 19 | ນອກແວ | 0.0 | 0.1 | 0.5 | 0.3 | 0.2 | -35.4 | 0.0 |
| 20 | ແມດຊີໂກ | 5.3 | 4.7 | 1.4 | 4.0 | 3.9 | -2.2 | 0.1 |
| **III** | **ປະເທດອື່ນໆໃນໂລກ** | **307.9** | **19.6** | **11.2** | **15.4** | **18.8** | **22.2** | **0.3** |
| | **ລວມ** | **5,848.5** | **5,797.4** | **5,015.8** | **5,892.0** | **6,858.5** | **16.4** | **100.0** |

**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ ແລະ ກະຊວງພະລັງງານ ແລະບໍ່ແຮ່, ຄິດໄລ່ໂດຍກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

**ຕາຕະລາງ 6**: ລະບອບໃບແຈ້ງພາສີ ຂາອອກ CPC (Customs Procedure Code)

| ລະຫັດ | ຊື່ຂອງລະບອບໃບແຈ້ງພາສີ | ນັບຫລືບໍ່ນັບໃນສະຖິຕິການຄ້າ |
|---|---|---|
| 1000 | ການສົ່ງອອກ | ນັບເປັນສະຖິຕິການຄ້າ |
| 1040 | ການສົ່ງອອກຫລັງການນຳເຂົ້າເພື່ອການຊົມໃຊ້ | ນັບເປັນສະຖິຕິການຄ້າ |
| 1100 | ການສົ່ງອອກຍ່ອຍ | ນັບເປັນສະຖິຕິການຄ້າ |
| 2000 | ການສົ່ງອອກຊົ່ວຄາວ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 2100 | ການສົ່ງອອກຊົ່ວຄາວເພື່ອວາງສະແດງ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 3025 | ບໍ່ມີຢູ່ໃນພາສີ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 3045 | ການສົ່ງອອກຄືນສິນຄ້ານຳເຂົ້າເພື່ອສົ່ງອອກ | ນັບເປັນສະຖິຕິການຄ້າ |
| 3046 | ການສົ່ງອອກຄືນສິນຄ້ານຳເຂົ້າເພື່ອສົ່ງອອກ ຜ່ານລະບົບ C2000 | ນັບເປັນສະຖິຕິການຄ້າ |
| 3050 | ການສົ່ງອອກຄືນພາຍຫລັງການນຳເຂົ້າຊົ່ວຄາວທົ່ວໄປ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 3051 | ການສົ່ງອອກຄືນພາຍຫລັງການນຳເຂົ້າຊົ່ວຄາວເຂດເສດຖະກິດພິເສດ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 3052 | ການສົ່ງອອກຄືນພາຍຫລັງການນຳເຂົ້າຊົ່ວຄາວເພື່ອຜະລິດປັບປຸງ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 3054 | ການສົ່ງອອກຄືນພາຍຫລັງການນຳເຂົ້າຊົ່ວຄາວຂອງອົງການຈັດຕັ້ງສາກົນ,ສະຖານທູດ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 3055 | ການສົ່ງອອກຄືນພາຍຫລັງການນຳເຂົ້າຊົ່ວຄາວຜ່ານລະບົບ C2000 | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 3056 | ການສົ່ງອອກຄືນພາຍຫລັງການນຳເຂົ້າຊົ່ວຄາວຂອງໂຄງການລົງທຶນຂອງລັດ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 3057 | ການສົ່ງອອກຄືນພາຍຫລັງການນຳເຂົ້າຊົ່ວຄາວຂອງໂຄງການລົງທຶນຂອງເອກະຊົນ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 3071 | ການສົ່ງອອກຄືນພາຍຫລັງການນຳເຂົ້າສາງຮ້ານຄ້າປອດພາສີ | ນັບເປັນສະຖິຕິການຄ້າ |
| 3072 | ການສົ່ງອອກຄືນພາຍຫລັງການນຳເຂົ້າຮ້ານຄ້າປອດ | ນັບເປັນສະຖິຕິການຄ້າ |
| 3075 | ການສົ່ງອອກຄືນພາຍຫລັງການນຳເຂົ້າລະບອບສາງຜ່ານ C2000 | ນັບເປັນສະຖິຕິການຄ້າ |
| 3082 | ສົ່ງອອກພາຍຫຼັງນຳເຂົາເພື່ອສົ່ງອອກ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 3085 | ສົ່ງອອກພາຍຫລັງນຳເຂົ້າສົ່ງອອກຜ່ານແດນ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 4000 | ການນຳເຂົ້າເພື່ອການຊົມໃຊ້ | ນັບເປັນສະຖິຕິການຄ້າ |
| 4050 | ການນຳເຂົ້າເພື່ອການຊົມໃຊ້ພາຍຫລັງການນຳເຂົ້າຊົ່ວຄາວທົ່ວໄປ | ນັບເປັນສະຖິຕິການຄ້າ |
| 4051 | ການນຳເຂົ້າເພື່ອການຊົມໃຊ້ພາຍຫລັງການນຳເຂົ້າຊົ່ວຄາວເຂດເສດຖະກິດພິເສດ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 4052 | ການນຳເຂົ້າເພື່ອການຊົມໃຊ້ພາຍຫລັງການນຳເຂົ້າຊົ່ວຄາວເພື່ອຜະລິດປຸງແຕ່ງ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 4054 | ການນຳເຂົ້າເພື່ອການຊົມໃຊ້ຫລັງການນຳເຂົ້າຊົ່ວຄາວຂອງອົງການຈັດຕັ້ງສາກົນ,ທູດ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 4055 | ການນຳເຂົ້າເພື່ອການຊົມໃຊ້ພາຍຫລັງການນຳເຂົ້າຊົ່ວຄາວຜ່ານລະບົບ C2000 | ນັບເປັນສະຖິຕິການຄ້າ |
| 4056 | ການນຳເຂົ້າເພື່ອການຊົມໃຊ້ພາຍຫລັງການນຳເຂົ້າຊົ່ວຄາວໂຄງການລົງທຶນຂອງລັດ | ນັບເປັນສະຖິຕິການຄ້າ |
| 4057 | ການນຳເຂົ້າເພື່ອການຊົມໃຊ້ຫລັງການນຳເຂົ້າຊົ່ວຄາວໂຄງການລົງທຶນຂອງເອກະຊົນ | ນັບເປັນສະຖິຕິການຄ້າ |
| 4071 | ການນຳເຂົ້າເພື່ອການຊົມໃຊ້ພາຍຫລັງການນຳເຂົ້າສາງຮ້ານຄ້າປອດພາສີ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 4072 | ການນຳເຂົ້າເພື່ອການຊົມໃຊ້ພາຍຫລັງການນຳເຂົ້າຮ້ານຄ້າປອດພາສີ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 4075 | ການນຳເຂົ້າພາຍຫລັງການນຳເຂົ້າລະບອບສາງຜ່ານ C2000 | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 4081 | ການນຳເຂົ້າເພື່ອການຊົມໃຊ້ພາຍຫລັງການນຳເຂົ້າຄ້ຳປະກັນ | ນັບເປັນສະຖິຕິການຄ້າ |
| 4085 | ການນຳເຂົ້າເພື່ອການຊົມໃຊ້ພາຍຫລັງການນຳເຂົ້າຄ້ຳປະກັນຜ່ານລະບົບ C2000 | ນັບເປັນສະຖິຕິການຄ້າ |

| ລະຫັດ | ຊື່ຂອງລະບອບໃບແຈ້ງພາສີ | ນັບຫລືບໍ່ນັບໃນສະຖິຕິການຄ້າ |
|---|---|---|
| 4100 | ຍົກເວັ້ນຄ່າຊັກພິເສດ(ສະເພາະການສົ່ງອອກ EX1 "10") | ນັບເປັນສະຖິຕິການຄ້າ |
| 4200 | ນໍາເຂົ້າສ່ວນບຸກຄົນຈາກຜູ້ໂດຍສານ | ນັບເປັນສະຖິຕິການຄ້າ |
| 4400 | ການນໍາເຂົ້າເສຍພາສີຍ່ອຍ | ນັບເປັນສະຖິຕິການຄ້າ |
| 4451 | ການນໍາເຂົ້າເສຍພາສີຍ່ອຍພາຍຫລັງການນໍາ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 4500 | ການນໍາເຂົ້າເພື່ອສົ່ງອອກ | ນັບເປັນສະຖິຕິການຄ້າ |
| 4581 | ການນໍາເຂົ້າເພື່ອສົ່ງອອກ ພາຍຫລັງ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 5000 | ການນໍາເຂົ້າຊົ່ວຄາວທົ່ວໄປ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 5081 | ນໍາເຂົ້າພາຍຫລັງການເຄື່ອນຍ້າຍຄໍ້າປະກັນ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 5085 | ການນໍາເຂົ້າຊົ່ວຄາວທົ່ວໄປພາຍຫລັງການນໍາເຂົ້າຄໍ້າປະກັນຜ່ານລະບົບ C2000 | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 5100 | ການນໍາເຂົ້າຊົ່ວຄາວເຂດເສດຖະກິດພິເສດ | ນັບເປັນສະຖິຕິການຄ້າ |
| 5181 | ການນໍາເຂົ້າຊົ່ວຄາວເຂດເສດຖະກິດພິເສດ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 5200 | ການນໍາເຂົ້າຊົ່ວຄາວຂອງໂຮງງານເພື່ອຜະລິດປຸງແຕ່ງ | ນັບເປັນສະຖິຕິການຄ້າ |
| 5281 | ການນໍາເຂົ້າຊົ່ວຄາວຂອງໂຮງງານເພື່ອຜະລິດປຸງແຕ່ງຫລັງການນໍາເຂົ້າຄໍ້າປະກັນ | ນັບເປັນສະຖິຕິການຄ້າ |
| 5285 | ການນໍາເຂົ້າຊົ່ວຄາວຂອງໂຮງງານເພື່ອຜະລິດຫລັງການນໍາເຂົ້າຄໍ້າປະກັນຜ່ານ C2000 | ນັບເປັນສະຖິຕິການຄ້າ |
| 5400 | ການນໍາເຂົ້າຊົ່ວຄາວຂອງອົງການຈັດຕັ້ງສາກົນແລະສະຖານທູດ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 5481 | ການນໍາເຂົ້າຊົ່ວຄາວຂອງອົງການຈັດຕັ້ງສາກົນແລະສະຖານທູດ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 5500 | ການນໍາເຂົ້າຊົ່ວຄາວຜ່ານລະບົບ C2000 | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 5600 | ການນໍາເຂົ້າຊົ່ວຄາວຂອງໂຄງການລົງທຶນຂອງລັດ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 5681 | ການນໍາເຂົ້າຊົ່ວຄາວຂອງໂຄງການລົງທຶນຂອງລັດຫລັງການນໍາເຂົ້າຄໍ້າປະກັນ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 5685 | ການນໍາເຂົ້າຊົ່ວຄາວຂອງໂຄງການລົງທຶນຂອງລັດຫລັງການນໍາເຂົ້າຄໍ້າປະກັນຜ່ານC2000 | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 5700 | ການນໍາເຂົ້າຊົ່ວຄາວຂອງໂຄງການລົງທຶນຂອງເອກະຊົນ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 5781 | ການນໍາເຂົ້າຊົ່ວຄາວຂອງໂຄງການລົງທຶນຂອງເອກະຊົນຫລັງການນໍາເຂົ້າຄໍ້າປະກັນ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 5785 | ການນໍາເຂົ້າຊົ່ວຄາວໂຄງການລົງທຶນຂອງເອກະຊົນຫລັງການນໍາເຂົ້າຄໍ້າປະກັນຜ່ານC2000 | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 6010 | ການນໍາເຂົ້າຄືນໃຫມ່ຂອງສິນຄ້າທີ່ສົ່ງອອກໃນເມື່ອກ່ອນ | ນັບເປັນສະຖິຕິການຄ້າ |
| 6020 | ການນໍາເຂົ້າຄືນພາຍຫລັງການສົ່ງອອກຊົ່ວຄາວ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 6021 | ການນໍາເຂົ້າຄືນພາຍຫລັງການສົ່ງອອກຊົ່ວ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 6025 | ການນໍາເຂົ້າຄືນພາຍຫລັງການສົ່ງອອກຊົ່ວຄາວຜ່ານ C2000 | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 7100 | ການນໍາເຂົ້າສາງຮ້ານຄ້າປອດພາສີ | ນັບເປັນສະຖິຕິການຄ້າ |
| 7171 | ການເຄື່ອນຍ້າຍລະຫວ່າງສາງຮ້ານຄ້າປອດພາສີຫາສາງຮ້ານຄ້າປອດ(ສາຂາ) | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 7200 | ການນໍາເຂົ້າຮ້ານຄ້າປອດພາສີ | ນັບເປັນສະຖິຕິການຄ້າ |
| 7271 | ການເຄື່ອນຍ້າຍຈາກສາງເຂົ້າຮ້ານຄ້າປອດພາສີ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 7272 | ການເຄື່ອນຍ້າຍລະຫວ່າງຮ້ານຄ້າປອດພາສີຫາຮ້ານຄ້າປອດພາສີ(ສາຂາ) | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 8100 | ການນໍາເຂົ້າຄໍ້າປະກັນ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 8200 | ການນໍາເຂົ້າຜ່ານແດນສາກົນ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 8300 | ການເຄື່ອນຍ້າຍພາຍໃນ | ບໍ່ໄດ້ນັບເປັນສະຖິຕິການຄ້າ |

| ລະຫັດ | ຊື່ຂອງລະບອບໃບແຈ້ງພາສີ | ນັບຫລືບໍ່ນັບໃນສະຖິຕິການຄ້າ |
|---|---|---|
| 8340 | ການເຄື່ອນຍ້າຍພາຍໃນ | ບໍ່ໄດ້ນັບເປັນສະຖິຕິການຄ້າ |
| 8500 | ການນຳເຂົ້າຄ້ຳປະກັນຜ່ານລະບົບ C2000 | ບໍ່ໄດ້ນັບເປັນສະຖິຕິການຄ້າ |

**ແຫຼ່ງຂໍ້ມູນ:** ກົມພາສີ, ກະຊວງການເງິນ.

**ຕາຕາລາງ 7:** ຈຳນວນຊາຍແດນ ສປປ ລາວ ກັບ 5 ປະເທດເພື່ອນບ້ານ

| ລ/ດ | ດ່ານຊາຍແດນ | ດ່ານສາກົນ | ດ່ານທ້ອງຖິ່ນ | ດ່ານປະເພນີ | ລວມ |
|---|---|---|---|---|---|
| 1 | ລາວ-ໄທ | 8 | 14 | 26 | 48 |
| 2 | ລາວ-ຈີນ | 1 | 5 | 8 | 14 |
| 3 | ລາວ-ຫວຽດນາມ | 7 | 8 | 25 | 40 |
| 4 | ລາວ-ມຽນມາ | 1 | 2 | 0 | 3 |
| 5 | ລາວ-ກຳປູເຈຍ | 1 | 3 | 0 | 4 |
| ລວມ | | 18 | 32 | 59 | 109 |

**ແຫຼ່ງຂໍ້ມູນ:** ກະຊວງໂຍທາທິການ ແລະ ຂົນສົ່ງ

ສູນສະຖິຕິແຫ່ງຊາດ
ກະຊວງແຜນການ ແລະ ການລົງທຶນ
ບ້ານດົງນາໂຊກເໜືອ, ເມືອງສີໂຄດຕະບອງ
ນະຄອນຫຼວງວຽງຈັນ, ສປປລາວ
ໂທ: +856 21 214740
ແຟັກ: +856 21 242022
ອີເມວ: lstats@lsb.gov.la
ເວບໄຊ: www.laosis.gov.la
www.lsb.gov.la